ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລາມລະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ມີນາ 2024
ປີທີ 13
ສະບັບທີ 963
ລາຍສັປະດາ

## ທ່ານຮອງປະທານສະພາແຫ່ງຊາດ ຢ້ຽມຢາມ ແລະ ເຮັດວຽກຢູ່ມົງໂກລີ



(ສພຊ) ຕອບສະໜອງການເຊື້ອເຊີນຂອງທ່ານ ເມິງຄ໌ບາທາຣ໌ ລັກຄະວາຮອງປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ແລະ ເພື່ອເປັນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອແລະການຮ່ວມມືທີ່ດີ ລະຫວ່າງ ສປປ ລາວ-ມົງໂກລີ ເວົ້າລວມ, ເວົ້າສະເພາະລະຫວ່າງສອງອົງການນິຕິບັນຍັດ.

ວັນທີ 15 ມີນາ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເດີນທາງຢ້ຽມຢາມ ແລະ ເຮັດວຽກຢູ່ມົງໂກລີ ຢ່າງເປັນທາງການ.

ອອກຕ້ອນຮັບຄະນະທີ່ສະໜາມບິນຂອງທ່ານ ເອັ່ງຄ໌-ອຳກາລັງ ສະມາຊິກສະພາຄູຣານໃຫຍ່, ປະທານກຳມາທິການຄວາມໝັ້ນຄົງ ແລະ ນະໂຍບາຍຕ່າງປະເທດຂອງສະພາຄູຣານໃຫຍ່, ປະທານຄະນະມິດຕະພາບລັດຖະສະພາ ມົງໂກລີ-ລາວ ພ້ອມດ້ວຍຄະນະ ແລະ ທ່ານ ແພງສະຫວັນ ແກ້ວປະເສີດ ເອກອັກຄະລັດຖະທູດລາວ ປະຈຳປະເທດມົງໂກລີ.

ຕອນເຊົ້າວັນທີ 16 ມີນາ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດແຫ່ງ ສປປ ລາວ ໄດ້ມີການພົບປະສອງຝ່າຍກັບທ່ານ ເມິງຄ໌ບາທາຣ໌ ລັກຄະວາ ຮອງປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີພ້ອມດ້ວຍຄະນະ.

ທ່ານຮອງປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ໄດ້ສະແດງຄວາມຕ້ອນຮັບອັນອົບອຸ່ນແລະຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກຂອງທ່ານຮອງປະທານສະພາແຫ່ງຊາດ

ອ່ານຕໍ່ໜ້າ 4

## ທາບທາມຄຳຄິດເຫັນໃສ່ຮ່າງປັບປຸງກົດໝາຍ 3 ສະບັບ ຢູ່ແຂວງບໍລິຄຳໄຊ



(ສພຊ) ສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ມີແຜນປັບປຸງກົດໝາຍຂົງເຂດສະພາແຫ່ງຊາດຮັບຜິດຊອບ ແລະ ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງ ແນໃສ່ປັບປຸງເຄື່ອງມືສຳຄັນໃຫ້ແກ່ການເຄື່ອນໄຫວຂອງ ສພຊ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໃນຕໍ່ໜ້າໃຫ້ເປັນລະບົບ, ຄົບຖ້ວນ, ຮັດກຸມ ແລະ ສາມາດປະຕິບັດໄດ້ຢ່າງມີປະສິດທິພາບ, ປະສິດທິຜົນ.

ກອງປະຊຸມທາບທາມຄຳຄິດເຫັນໃສ່ຮ່າງປັບປຸງກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ ປະກອບມີ: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍ

ອ່ານຕໍ່ໜ້າ 4

## ທາບທາມກົດໝາຍ 3 ສະບັບ ຂົງເຂດ ສພຊ ຢູ່ 2 ແຂວງ



(ສພຊ) ລະຫວ່າງວັນທີ 18-19 ມີນາ 2024 ທີ່ສະພາປະຊາຊົນແຂວງ (ສພຂ) ຫົວພັນ ແລະ ລະຫວ່າງວັນທີ 21-22 ມີນາ 2024 ທີ່ ສພຂ ຊຽງຂວາງ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ແລະ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ; ເຂົ້າຮ່ວມມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ພ້ອມດ້ວຍບັນດາທ່ານການນຳພັກ-ລັດຂັ້ນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການອ້ອມຂ້າງແຂວງແລະພາກສ່ວນທີ່ກ່ຽວຂ້ອງຂອງແຂວງຫົວພັນ ແລະ ແຂວງຊຽງຂວາງ.

ທັງນີ້ ກໍເພື່ອເປັນການປະຕິບັດຕາມກົດໝາຍວ່າດ້ວຍການສ້າງນິຕິກຳສະບັບປັບປຸງປີ 2021, ມາດຕາ 17 ກຳນົດກ່ຽວກັບການຈັດຕັ້ງທີ່ມີສິດສະເໜີສ້າງກົດໝາຍ ແລະ ມາດຕາ 39 ການທາບທາມຄຳເຫັນ, ໃນ

ອ່ານຕໍ່ໜ້າ 3

## ຮອງປະທານ ສພຊ ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຢູ່ 3 ແຂວງພາກເໜືອ



(ສພຊ) ເພື່ອຕິດຕາມການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງປີ 2021 ທັງເປັນການເພີ່ມທະວີການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແນໃສ່ຮັບປະກັນເຮັດໃຫ້ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຄົບຖ້ວນ, ຖືກຕ້ອງຕາມຄຳຕັດສິນ ແລະ ກົດໝາຍທີ່ກຳນົດໄວ້; ເພື່ອເປັນຂໍ້ມູນພື້ນຖານກະກຽມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ກໍຄືກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ແລະ ເປັນບ່ອນອີງໃນການປຶກສາຫາລື ໃນລະຫວ່າງວັນທີ 18-20 ມີນາ 2024 ທ່ານ ພົທ.ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດພ້ອມດ້ວຍທ່ານ ຄຳແພງ ວິລະພັນ

ອ່ານຕໍ່ໜ້າ 8

## ຄະນະຜູ້ແທນສະພາແຫ່ງຊາດລາວ ເຂົ້າຮ່ວມສັງເກດການການເລືອກຕັ້ງປະທານາທິບໍດີລັດເຊຍ



(ສພຊ) ໃນລະຫວ່າງວັນທີ 14-18 ມີນາ 2024 ຄະນະຜູ້ແທນສະພາແຫ່ງຊາດລາວນຳໂດຍທ່ານ ສົມຍາ ປຣະເສີດ ກຳມະການຄະນະປະຈຳ, ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ເດີນທາງໄປສະຫະພັນລັດເຊຍ ເພື່ອເຂົ້າຮ່ວມສັງເກດການການເລືອກຕັ້ງປະທານາທິບໍດີແຫ່ງສະຫະພັນຣັດເຊຍຕາມການເຊື້ອເຊີນຂອງປະທານສະພາສູງ ແລະ ສະພາຕໍ່າຣັດເຊຍ ໃນນາມທີ່ສະພາແຫ່ງຊາດລາວເປັນປະທານລັດຖະສະພາລະຫວ່າງຊາດອາຊຽນ (AIPA) ໃນປີ 2024.

ການເລືອກຕັ້ງປະທານາທິບໍດີແຫ່ງສະຫະພັນລັດເຊຍຈັດຂຶ້ນທຸກໆ 6 ປີ ເຊິ່ງການເລືອກຕັ້ງຄັ້ງນີ້ ມີຜູ້ລົງສະໝັກຮັບເລືອກຕັ້ງເປັນປະທານາທິບໍດີ ທັງໝົດ 4 ທ່ານ, ໃນນີ້ ມີຜູ້ສະໝັກເອກະລາດ 1 ທ່ານ ແລະ ຜູ້ສະໝັກທີ່ເປັນຕົວແທນຈາກພັກການເມືອງ 3 ທ່ານ ປະກອບມີ: 1) ທ່ານ ວະລາດີເມຍ ປູຕິນ ປະທານາທິບໍດີຄົນປັດຈຸບັນຜູ້ສະໝັກເອກະລາດ, 2) ທ່ານ ວະລາດີສລາບ ດາວານກົບ ຜູ້ສະໝັກຈາກພັກປະຊາຊົນໃໝ່, 3) ທ່ານ ນິໂກລາຍ ກາ ຣິໂຕນົບ ຈາກພັກກອມມູນິດສະຫະພັນລັດເຊຍ, 4) ທ່ານ ເລໂອນິດ ສະລູສະກີຈາກພັກເສລີປະຊາທິປະໄຕ.

ອ່ານຕໍ່ໜ້າ 2

## ສຊປລ ລົງຕິດຕາມຊຸກຍູ້ວຽກງານກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຢູ່ ສພຊ



(ສພຊ) ໃນຕອນບ່າຍວັນອັງຄານທີ 19 ມີນາ 2024 ທີ່ສະພາແຫ່ງຊາດ (ສພຊ), ສະຫາຍ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມພົບປະຂອງສະຫາຍນວນທອງ ສຸວັນວິໄຊຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ສຊປລ) ພ້ອມດ້ວຍຄະນະ ໃນໂອກາດລົງຕິດຕາມ, ຊຸກຍູ້ວຽກງານການກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນ.

ໃນໂອກາດນີ້, ສະຫາຍ

ອ່ານຕໍ່ໜ້າ 12



ອາຫານມີພິດ... (ໜ້າ 9)



ກຣົອຊີ ... (ໜ້າ 11)




ເລື່ອງທີ່ໜ້າສົນໃຈ... (ໜ້າ 12)

**ຊົມເຊີຍວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 69 ປີ (22 ມີນາ 1955 - 22 ມີນາ 2024) ຢ່າງສຸດໃຈ!**

# ຫາລືການສ້າງນິຕິກຳການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ

(ສພຊ) ລະຫວ່າງວັນທີ 18-20 ມີນາ 2024 ທີ່ແຂວງວຽງຈັນ, ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມຄົ້ນຄວ້າແລະປຶກສາຫາລືກ່ຽວກັບການສ້າງຮ່າງນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແລະຄູ່ມືກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ພາຍໃຕ້ການເປັນປະທານຂອງທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຮອງປະທານສະພາປະຊາຊົນ, ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະເລຂາທິການສະພາປະຊາຊົນແຂວງຫຼວງພະບາງ ແລະ ແຂວງຄຳມ່ວນ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງຈາກສະພາແຫ່ງຊາດ.

ທັງນີ້ກໍເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ຕາມມາດຕາ 124 ແລະ 125 ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ ທັງເປັນການສ້າງນິຕິກຳໃຫ້ເປັນບ່ອນອີງໃນການເຄື່ອນໄຫວວຽກງານການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳເປັນລະບົບຄົບຊຸດ ສາມາດຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມເປັນເອກະພາບກັນຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ.

ໃນກອງປະຊຸມ ໄດ້ປຶກສາຫາລືກ່ຽວກັບການສ້າງນິຕິກຳກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ; ຮັບຟັງບົດຮຽນການພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງຫຼວງພະບາງ ແລະແຂວງວຽງຈັນທີ່ສ່ອງແສງໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຂໍ້ຫຍຸ້ງຍາກຕ່າງໆໃນໄລຍະຜ່ານມາ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ; ຮັບຟັງບາງບົດຮຽນກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ການເກັບກຳຂໍ້ມູນຕ່າງໆ ຈາກຊ່ຽວຊານສາກົນ. ກອງປະຊຸມຍັງໄດ້ເຜີຍແຜ່ມະຕິຂອງ ຄປຈສພຊ ຈຳນວນໜຶ່ງ ເຊັ່ນ: ມະຕິວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ; ມະຕິວ່າດ້ວຍການຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ; ມະຕິວ່າດ້ວຍການຕີຄວາມໝາຍ ແລະ ອະທິບາຍກົດໝາຍ; ມະຕິວ່າດ້ວຍການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ ແລະ ຄຳແນະນຳຂອງ ຄປຈສພຊກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກມູນນິທິ ເວສທ໌ມິນສ໌ເທີ ເພື່ອປະຊາທິ ປະໄຕ (Westminster Foundation for Democracy-WFD).

**(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)**

## ຄະນະ...

(ຕໍ່ຈາກໜ້າ 1)

ການເລືອກຕັ້ງໄດ້ເປີດຂຶ້ນພ້ອມກັນໃນທົ່ວປະເທດຢ່າງເປັນທາງການເປັນເວລາສາມວັນ ນັບແຕ່ວັນທີ 15-17 ມີນາ 2024, ມີເຂດເລືອກຕັ້ງທັງໝົດ 93.644 ເຂດ, ຢູ່ນອກປະເທດ 269 ແຫ່ງ ໃນ 50 ປະເທດທົ່ວໂລກ;ເຊິ່ງຜູ້ມີສິດເລືອກຕັ້ງທີ່ມີອາຍຸຄົບ 18 ປີບໍລິບູນຂຶ້ນໄປ ຈຳນວນ 114.212.734 ຄົນ ໃນນີ້ ມີຜູ້ມີສິດປ່ອນບັດທີ່ດຳລົງຊີວິດຢູ່ຕ່າງປະເທດ 1.890.863 ຄົນ.

ໃນການເລືອກຕັ້ງຄັ້ງນີ້, ມີຜູ້ໄປໃຊ້ສິດຫຼາຍກວ່າ 74% ຂອງຜູ້ມີສິດປ່ອນບັດທັງໝົດ ເຊິ່ງເປັນສະຖິຕິທີ່ສູງທີ່ສຸດໃນປະຫວັດການເລືອກຕັ້ງໃນສະຫະພັນລັດເຊຍ, ໂດຍແມ່ນທ່ານ ວະລາດີເມຍ ປູຕິນ ຜູ້ສະໝັກເອກະລາດ ໄດ້ຮັບໄຊຊະນະເໜືອຄູ່ແຂ່ງຄົນອື່ນໆຢ່າງຖ້ວມທົ້ນສູງເຖິງ87,28%ເຮັດໃຫ້ທ່ານສືບຕໍ່ເປັນປະທານາທິບໍດີ ແຫ່ງສະຫະພັນລັດເຊຍ ໄປອີກ 6 ປີ.

ຕໍ່ກັບການເລືອກຕັ້ງປະທານາທິບໍດີຄັ້ງນີ້, ເຈົ້າພາບໄດ້ເຊື້ອເຊີນຜູ້ສັງເກດການຈາກ 129 ປະເທດ, 10 ອົງການຈັດຕັ້ງສາກົນ, 34 ສະພາແຫ່ງຊາດ ແລະ36 ຄະນະກຳມະການການເລືອກຕັ້ງປະເທດຕ່າງໆ ລວມທັງຊ່ຽວຊານດ້ານການເລືອກຕັ້ງ ມາຕິດຕາມ ແລະ ສັງເກດການ ລວມທັງໝົດ 1.115 ທ່ານ; ຄະນະຜູ້ແທນສະພາແຫ່ງຊາດລາວ ໃນນາມທີ່ເປັນປະທານໄອປາປີ 2024 ກໍໄດ້ຮ່ວມກັບສະມາຊິກໄອປາ ແລະ ຄະນະຜູ້ສັງເກດການປະເທດອື່ນໆ ໄປຕິດຕາມ ແລະ ສັງເກດການຢູ່ໜ່ວຍເລືອກຕັ້ງຕ່າງໆ ຈຳນວນ 6 ແຫ່ງ ທີ່ນະຄອນຫຼວງມົດສະກູ.




ຄະນະກຳມະການການເລືອກຕັ້ງຂັ້ນສູນກາງ ແລະ ຄະນະກຳມະການການເລືອກຕັ້ງຂັ້ນຕ່າງໆ ໄດ້ມີການກະກຽມເຈົ້າໜ້າທີ່, ໜ່ວຍປ່ອນບັດ, ຫີບບັດ, ບັນຊີລາຍຊື່ຜູ້ສະໝັກ, ບັນຊີລາຍຊື່ຜູ້ມີສິດປ່ອນບັດໄດ້ຖືກບັນທຶກໄວ້ໃນລະບົບຖານຂໍ້ມູນ ພ້ອມທັງມີການຕິດຕັ້ງເຄື່ອງອຸປະກອນທີ່ທັນສະໄໝເຂົ້າໃນການເລືອກຕັ້ງ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆແລະຄວາມປອດໄພຮອບດ້ານ ໃຫ້ແກ່ການມາໃຊ້ສິດປ່ອນບັດເລືອກຕັ້ງຂອງປະຊາຊົນ ໂດຍກຳນົດເອົາໂຮງຮຽນ ແລະ ສະຖາບັນການສຶກສາຕ່າງໆໃນຂອບເຂດທົ່ວປະເທດເປັນໜ່ວຍປ່ອນບັດເປັນເວລາ 3 ວັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ປະຊາຊົນຊາວລັດເຊຍທັງຢູ່ພາຍໃນແລະນອກປະເທດ ໄດ້ໄປໃຊ້ສິດຂອງຕົນຢ່າງເຕັມສ່ວນ.

ໃນການເຂົ້າຮ່ວມສັງເກດການ, ທ່ານ ສົມຍາ ປຣະເສີດ, ຄະນະຜູ້ແທນຈາກສະພາແຫ່ງຊາດລາວພ້ອມກັບຄະນະຜູ້ແທນໄອປາໄດ້ເຄື່ອນໄຫວຢ້ຽມຢາມໜ່ວຍປ່ອນບັດແລະພົບປະກັບຕົວແທນຜູ້ສະໝັກ ແລະ ເຈົ້າໜ້າທີ່ທີ່ຮັບຜິດຊອບການເລືອກຕັ້ງພ້ອມທັງໃຫ້ສຳພາດຕໍ່ສື່ມວນຊົນຫຼາຍສຳນັກ ທັງວິທະຍຸ ແລະ ໂທລະພາບຫຼາຍຄັ້ງ ໂດຍທ່ານໄດ້ຕີລາຄາ ແລະ ສະແດງຄວາມຊົມເຊີຍຕໍ່ການເລືອກຕັ້ງຄັ້ງນີ້ "ວ່າມີປະຊາຊົນໃຫ້ຄວາມສົນໃຈ ແລະ ມີຄວາມຕື່ນຕົວໄປໃຊ້ສິດປ່ອນບັດເລືອກຕັ້ງຢ່າງຫຼວງຫຼາຍ, ນຳໃຊ້ລະບົບເອເລັກໂຕຣນິກ, ອຸປະກອນທີ່ທັນສະໄໝເຂົ້າໃນການປ່ອນບັດເລືອກຕັ້ງ ແລະ ການເລືອກຕັ້ງໄດ້ດຳເນີນໄປດ້ວຍຄວາມເປັນລະບຽບຮຽບຮ້ອຍ, ຕາມຂະບວນການປະຊາທິປະໄຕ, ເປີດເຜີຍ, ໂປ່ງໃສ, ຍຸຕິທຳ ແລະ ດຳເນີນໄປຕາມລັດຖະທຳມະນູນແຫ່ງສະຫະພັນລັດເຊຍ".

ພ້ອມດຽວກັນນີ້, ຄະນະຜູ້ແທນສະພາແຫ່ງຊາດລາວຍັງໄດ້ຖືໂອກາດພົບປະເຮັດວຽກສອງຝ່າຍກັບປະທານກຳມາທິການການຕ່າງປະເທດຂອງສະພາສູງ ແລະ ສະພາຕໍ່າຂອງສະຫະພັນລັດເຊຍ ເພື່ອປຶກສາຫາລືກ່ຽວກັບການພົວພັນຮ່ວມມືໃນຂົງເຂດນິຕິບັນຍັດລະຫວ່າງສອງປະເທດລາວ-ລັດເຊຍ ໂດຍສະເພາະແມ່ນການເດີນທາງຢ້ຽມຢາມຢ່າງເປັນທາງການຂອງທ່ານປະທານສະພາສູງລັດເຊຍ ແລະ ການສະໜັບສະໜູນການເປັນປະທານໄອປາຂອງ ສປປ ລາວ ໃນປີນີ້.

## ເລື່ອງ ເດັ່ນ ຂ່າວ ເດັດ

***# ຄັດໂດຍ: ທອມສະນິດ***

*❐ ໃນໄລຍະ 1 ປີຜ່ານມາ ໄດ້ມີເຫດການໄພພິບັດເກີດຂຶ້ນໃນຂອບເຂດທົ່ວປະເທດທັງໝົດ 76 ຄັ້ງ ສົ່ງຜົນກະທົບຢູ່ 16 ແຂວງ ສົ່ງຜົນກະທົບໂດຍກົງຕໍ່ປະຊາຊົນ ຢູ່ 125 ເມືອງ 937 ບ້ານ 33.585 ຄອບຄົວ 107.334 ຄົນ ຍິງ53.058 ຄົນ ເສຍຊີວິດ 10 ຄົນ ແລະ ເຮືອນຖືກເສຍຫາຍ 14; ນອກນີ້, ຍັງສົ່ງຜົນກະທົບຕໍ່ພື້ນຖານໂຄງລ່າງ ເນື້ອທີ່ທຳການຜະລິດຖືກກະທົບ, ໂຄງລ່າງພື້ນຖານເສັ້ນທາງ, ໂຮງຮຽນ, ໂຮງໝໍ, ຊັບສົມບັດຂອງລັດ ແລະ ເອກະຊົນໄດ້ຮັບຜົນເສຍຫາຍຢ່າງໜັກໜ່ວງ ລວມມູນຄ່າເສຍຫາຍທັງໝົດ 1.114 ຕື້ກວ່າກີບ.*

***ໜສພ. ວຽງຈັນໃໝ່ 13/03/2024***

*❐ ໃນຕົ້ນປີ 2024, ສະພາບໄຟໄໝ້ລາມປ່າໃນຂອບເຂດທົ່ວປະເທດ ມີທ່າອ່ຽງຫຼຸດລົງເປັນຈຳນວນຫຼາຍ ຖ້າທຽບໃສ່ໄລຍະດຽວກັນຂອງປີ 2023 ທັງນີ້, ຍ້ອນວ່າລັດຖະບານ ກໍຄືການນຳຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານສະກັດກັ້ນ, ຄວບຄຸມໄຟໄໝ້ລາມປ່າຢ່າງເຂັ້ມງວດ ເປັນຕົ້ນ: ກະກຽມຄວາມພ້ອມ ແລະ ມາດຕະການເຝົ້າລະວັງ, ຕ້ານ ແລະ ສະກັດກັ້ນໄປໄໝ້ລາມປ່າ ດ້ວຍການຫັນພະນັກງານລົງປະຈຳແຕ່ລະຈຸດ/ບ້ານທີ່ຫຼໍ່ແຫຼມ, ພ້ອມທັງເກັບກຳຂໍ້ມູນກຸ່ມເປົ້າໝາຍ ເພື່ອເຮັດສັນຍາກັບອົງການປົກຄອງບ້ານ ແລະ ປະຊາຊົນທີ່ມີສ່ວນກ່ຽວຂ້ອງນຳໃຊ້ທີ່ດິນປ່າໄມ້.*

***ໜສພ. ປະເທດລາວ 14/03/2024***

*❐ ໃນເດືອນມັງກອນ 2024, ສປປ ລາວ ສົ່ງອອກສິນຄ້າທັງໝົດມູນຄ່າປະມານ 561 ລ້ານໂດລາສະຫະລັດ ສິນຄ້າສົ່ງອອກຫຼັກປະກອບມີ: ມັນຕົ້ນ, ແຮ່ທອງ, ຄຳປະສົມ, ຄຳແທ່ງ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ແປ້ງມັນຕົ້ນ, ຢາງພາລາ, ນ້ຳຕານ, ແຮ່ເຫຼັກ ແລະ ເຍື່ອໄມ້ ແລະ ເສດເຍື່ອໄມ້; ສຳລັບມູນຄ່າການນຳເຂົ້າສິນຄ້າທັງໝົດ 749 ລ້ານໂດລາສະຫະລັດ ເຮັດໃຫ້ເດືອນທຳອິດຂອງປີ 2024 ສປປ ລາວ ຂາດດຸນການຄ້າ 188 ລ້ານໂດລາສະຫະລັດ(ໃນນີ້ຍັງບໍ່ລວມການສົ່ງອອກ-ນຳເຂົ້າໄຟຟ້າ) ສິນຄ້າທີ່ນຳເຂົ້າຫຼັກປະກອບມີ: ນ້ຳມັນກາຊວນ, ຜະລິດຕະພັນເຄມີປະສົມສຳເລັດຮູບ, ອຸປະກອນກົນຈັກ (ນອກຈາກເຄື່ອງກົນຈັກພາຫະນະ), ພາຫະນະທາງບົກ (ນອກຈາກລົດຈັກ, ລົດໄຖ), ເຄື່ອງໄຟຟ້າ ແລະ ອຸປະກອນໄຟຟ້າ; ສຳລັບປະເທດທີ່ ສປປ ລາວ ນຳເຂົ້າຫຼາຍໃນ 5 ອັນດັບ ມີ: ໄທ, ຈີນ, ຫວຽດນາມ, ສ ອາເມລິກາ ແລະ ຍີ່ປຸ່ນ.*

***ໜສພ. ປະເທດລາວ 19/03/2024***

*❐ ໃນປັດຈຸບັນ, ຂະແໜງຕັດຫຍິບໃນລາວຍັງຕ້ອງການແຮງງານຈຳນວນຫຼາຍ ເນື່ອງຈາກວ່າແຮງງານລາວໄດ້ຫຼັ່ງໄຫຼໄປເຮັດວຽກຕ່າງປະເທດຈຳນວນຫຼາຍ ຍ້ອນສະພາບເສດຖະກິດໃນປັດຈຸບັນ ໄດ້ສົ່ງຜົນກະທົບຕໍ່ການດຳລົງຊີວິດ ຂອງປະຊາຊົນ. ສະນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວ ທາງສະມາຄົມອຸດສາຫະກຳຕັດຫຍິບລາວ ຈຶ່ງໄດ້ມີການປັບປຸງຫຼາຍໜ້າວຽກ ພ້ອມທັງປັບແຮງງານຂັ້ນຕ່ຳຂຶ້ນເປັນ 1,6 ລ້ານກີບ ເພື່ອດຶງແຮງງານລາວບັນຈຸເຂົ້າສູ່ໂຮງຈັກໂຮງງານຕ່າງໆໃນຂະແໜງການດັ່ງກ່າວ ເພື່ອໃຫ້ວຽກງານດຳເນີນໄປໄດ້ໃນສະພາບຄວາມຫຍຸ້ງຍາກດັ່ງກ່າວ.*

***ໜສພ. ປະເທດລາວ 19/03/2024***

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON


# ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກສຕສ




(ສພຊ) ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ເປີດຂຶ້ນໃນຕອນເຊົ້າຂອງວັນທີ 21 ມີນາ 2024 ໂດຍການເປັນປະທານຮ່ວມ ຂອງສະຫາຍ ມະນີໂສ ຊາມຸນຕີ ຮອງເລຂາໜ່ວຍພັກຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະຫາຍພອນແກ້ວ ຕົ້ນອໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ວິມານ ອິນທະວົງ ຮັກສາການເລຂາໜ່ວຍ ຊາວໜຸ່ມຮາກຖານ ກສຕສ; ມີບັນດາສະຫາຍຕາງໜ້າໜ່ວຍຊາວໜຸ່ມຮາກຖານພາຍໃນສະພາແຫ່ງຊາດ ພ້ອມດ້ວຍສະມາຊິກຊາວໜຸ່ມຮາກຖານ ກສຕສ ລວມຜູ້ເຂົ້າຮ່ວມທັງໝົດ 37 ສະຫາຍ, ຍິງ 23 ສະຫາຍ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເມືອງ ແລະ ບົດສຳຫຼວດການນຳພາຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ຈາກນັ້ນ, ໄດ້ເປັນເອກະພາບພິຈາລະນາ, ຮັບຮອງເອົາບັນດາເນື້ອໃນສຳຄັນຄື: ຕີລາຄາສະພາບການເຄື່ອນໄຫວໄລຍະຜ່ານມາແຕ່ປີ2020-2024 ໃນນັ້ນ, ໄດ້ຍົກໃຫ້ເຫັນດ້ານດີຜົນງານຕ່າງໆທີ່ໜ່ວຍຊາວໜຸ່ມຮາກຖານ ກສຕສ ຍາດມາໄດ້ພ້ອມທັງຍົກໃຫ້ເຫັນດ້ານອ່ອນ ຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຕ້ອງໄດ້ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມຮາກຖານດີຂຶ້ນກວ່າເກົ່າ; ກຳນົດທິດທາງການເຄື່ອນໄຫວວຽກງານຂອງຄະນະໜ່ວຍຊາວໜຸ່ມຮາກຖານກສຕສ ໄລຍະ 5 ປີ (2024-2028) ໃນນັ້ນ, ຕົ້ນຕໍແມ່ນເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ, ການພັດທະນາວຽກງານຊາວໜຸ່ມ ຕິດພັນກັບການເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານ ກສຕສ ໄປພ້ອມກັບການ ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະແຜນການທີ່ວາງໄວ້ໃຫ້ມີປະສິດທິພາບ ແລະປະສິດທິຜົນສູງຂຶ້ນກວ່າເກົ່າ; ບົດສຳຫຼວດການນຳພາຂອງຄະນະໜ່ວຍຊາວໜຸ່ມຮາກຖານ ກ່ຽວກັບການຊີ້ນຳ-ນຳພາຕໍ່ວຽກງານຊາວໜຸ່ມຕະຫຼອດໄລຍະ 5 ປີຜ່ານມາ ເຊິ່ງຍົກໃຫ້ເຫັນດ້ານດີຜົນງານ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ຈະຕ້ອງນຳໄປເປັນບົດຮຽນໃນການສືບຕໍ່ປັບປຸງແກ້ໄຂເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຊາວໜຸ່ມ ກໍຄືການຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກສຕສ ບັນລຸຕາມຄາດໝາຍທີ່ວາງໄວ້.

ກອງປະຊຸມໄດ້ເສີມຂະຫຍາຍປະຊາທິປະໄຕ ເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມຊຸດໃໝ່ ເຊິ່ງປະກອບມີ 5 ສະຫາຍ ຍິງ 2 ສະຫາຍ, ໃນນັ້ນ, ກອງປະຊຸມເຫັນດີເລືອກເອົາສະຫາຍ ວິໄລສັກ ແສງຜູ່ໄທ ເປັນເລຂາ, ສະຫາຍ ວິມານ ອິນທະວົງ ເປັນຮອງເລຂາ ທັງເປັນປະທານກວດກາ, ສະຫາຍ ນາງ ເອເລນີ ເຊີນຮຸ່ງ ເປັນຮອງເລຂາ, ສະຫາຍ ນາງ ສົມສະນິດ ຕັນທະວົງ ແລະ ສະຫາຍ ທອງວັນ ວັນນະພາ ເປັນກຳມະການ; ນອກນັ້ນ, ກອງປະຊຸມຍັງໄດ້ເອກະພາບແຕ່ງຕັ້ງຄະນະກວດກາ ໂດຍເລືອກເອົາສະຫາຍ ວິມານ ອິນທະວົງ ເປັນປະທານກວດກາ, ສະຫາຍ ນາງ ສົມສົມນິດ ຕັນທະວົງ ເປັນຮອງ ປະທານກວດກາ ແລະສະຫາຍ ນ້ອຍ ພະກອນຄຳ ເປັນຄະນະ.

ໃນໂອກາດນີ້, ສະຫາຍມະນີໂສ ຊາມຸນຕີ ໄດ້ຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານການເຄື່ອນໄຫວ ແລະການສ້າງຂະບວນການຕ່າງໆທີ່ບັນດາສະມາຊິກຊາວໜຸ່ມ ໄດ້ຕັ້ງໜ້າປະກອບສ່ວນຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ. ພ້ອມກັນນີ້, ຍັງໄດ້ເນັ້ນໜັກ ແລະ ໃຫ້ທິດຊີ້ນຳຕໍ່ສະມາຊິກຊາວໜຸ່ມຕ້ອງໄດ້ເອົາໃຈໃສ່ບຸກບືນ ແລະ ຈັດຕັ້ງປະຕິບັດໜ້າທີ່ການເມືອງເພີ່ມຕື່ມບາງບັນຫາຄື: ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ຊຸກຍູ້ສະມາຊິກຊາວໜຸ່ມ ເອົາໃຈໃສ່ເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງຢ່າງເປັນເຈົ້າການ; ສືບຕໍ່ປຸກລະດົມສະມາຊິກ ຊາວໜຸ່ມໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ, ແບບແຜນການນຳພາ, ແບບແຜນວິທີ ເຮັດວຽກ ຢ່າງມີວິທະຍາສາດ ແລະ ມີຫົວຄິດປະດິດສ້າງບົນພື້ນຖານລະບຽບຫຼັກການ; ດຳເນີນຊີວິດການເມືອງ ເປັນປະຈຳທຸກເດືອນ ໂດຍຖືເອົາການຕຳນິຕິຊົມຕົນເອງ, ການຕິຊົມເຊິ່ງກັນແລະກັນເປັນປັດໄຈສຳຄັນ; ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ; ຕັ້ງໜ້າເຄື່ອນໄຫວປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມ ໂດຍຕິດພັນກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ເຊິ່ງເປັນພື້ນຖານປັດໄຈສຳຄັນເພື່ອເຮັດໃຫ້ໜ່ວຍຊາວໜຸ່ມຮາກຖານສາມາດຍາດໄດ້ຜົນງານທີ່ດີເດັ່ນຂຶ້ນກວ່າເກົ່າ; ພ້ອມກັນນັ້ນ ກໍຕ້ອງເອົາໃຈໃສ່ຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມໃຫ້ເປັນຂະ ບວນຟົດຟື້ນ, ຊີ້ນຳ-ນຳພາສະມາຊິກຊາວໜຸ່ມເຮັດລ້ອນໜ້າທີ່ເປັນເສນາທິການໃຫ້ແກ່ການນຳກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໃນຕໍ່ໜ້າໃຫ້ມີໝາກຜົນອັນຈົບງາມ.

**(ນາງ ໄຊໂສພາພອນ ມົ່ງມູງຄູນ)**




## ທາບທາມ...

(ຕໍ່ຈາກໜ້າ 1)

ນີ້ ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແມ່ນໜຶ່ງໃນຈຳນວນອົງການທີ່ມີສິດສະເໜີສ້າງກົດໝາຍ ແລະ ການທາບທາມຄຳເຫັນ ເຊິ່ງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນນອນຢູ່ໃນສິດ ແລະ ໜ້າທີ່ຂອງ ຄປຈສພຊ ເປັນຜູ້ສະເໜີສ້າງ ແລະ ປັບປຸງ ທັງເປັນການລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດຂອງ ສສຊ ແລະ ສສຂ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆ ເພື່ອປັບປຸງກົດໝາຍ 3 ສະບັບດັ່ງກ່າວ ໃຫ້ຄົບຖ້ວນ, ຮັດກຸມແລະແທດເໝາະກັບສະພາບຕົວຈິງ ກ່ອນທີ່ຈະນຳໄປພິຈາລະນາ, ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX;

ທ່ານສົມມາດພົລເສນາ ໄດ້ກ່າວເປີດກອງປະຊຸມ ແລະ ມີຄຳເຫັນວ່າ: ການປັບປຸງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແຕ່ລະຄັ້ງ ກໍໄດ້ເປັນບ່ອນອີງສຳຄັນແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ນັບມື້ດີຂຶ້ນ; ເຖິງຢ່າງໃດກໍຕາມ, ການປັບປຸງໄລຍະຜ່ານມາກໍບໍ່ທັນໄດ້ປະຕິບັດສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ໂດຍສະເພາະຂັ້ນຕອນການຈັດຕັ້ງປະຕິບັດ ແລະ ທາບທາມກົດໝາຍ ບໍ່ທັນເຮັດຢ່າງກວ້າງຂວາງ, ມີພຽງແຕ່ຄະນະຮັບຜິດຊອບທີ່ໄດ້ຖືກມອບໝາຍເປັນຜູ້ປັບປຸງ ແລ້ວກໍນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ ພິຈາລະນາແລະຮັບຮອງເຮັດໃຫ້ມີບາງເນື້ອໃນບໍ່ທັນຮັດກຸມ ແລະ ຈະແຈ້ງ ຈຶ່ງເຮັດໃຫ້ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນບາງດ້ານ ບໍ່ທັນມີຄຸນນະພາບເທົ່າທີ່ຄວນ. ສະນັ້ນ, ຈຸດປະສົງຂອງການທາບທາມຄັ້ງນີ້ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ເປັນການຍາດແຍ່ງເອົາຄຳຄິດຄຳເຫັນຂອງເປົ້າໝາຍຕ່າງໆໃນສັງຄົມເພື່ອນຳໄປຄົ້ນຄວ້າປັບປຸງກົດໝາຍເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນ ແລະຮັບໃຊ້ປະຊາຊົນຢ່າງແທ້ຈິງ. ຖ້າ 3 ກົດໝາຍດັ່ງກ່າວ ໄດ້ຖືກຮັບຮອງແລ້ວຈະກາຍເປັນເຄື່ອງມືສຳຄັນໃນການປະຕິບັດສິດ, ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບສູງຂຶ້ນຕື່ມ, ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາ ຮັບປະກັນເຮັດໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ, ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີຄວາມສັກສິດສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ໃນກອງປະຊຸມໄດ້ຮັບຟັງບົດລາຍງານກ່ຽວກັບການປັບປຸງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາ ເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງ 3 ກົດໝາຍຢ່າງມີຈຸດສຸມເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບ ນຳໄປຄົ້ນຄວ້າ, ວິເຄາະວິໄຈປັບປຸງກົດໝາຍແຕ່ລະສະບັບເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມແລະສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

ໃນໂອກາດມາເຄື່ອນໄຫວວຽກງານຢູ່ແຂວງຫົວພັນຄັ້ງນີ້, ເມື່ອວັນອາທິດທີ 17 ມີນາຜ່ານມາ, ທ່ານ ສົມມາດ ພົລເສນາ ແລະ ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ ພ້ອມດ້ວຍທີມງານ ໄດ້ນຳເອົາໄຟຟ້າໂຊລາເຊວ ຈຳນວນ 1 ຊຸດ ມູນຄ່າ 25 ລ້ານກີບ ມອບໃຫ້ເຂດພະລາທິການຫ້ວຍສົມ, ກອງບັນຊາການທະຫານເມືອງຊຳເໜືອ ເພື່ອປະກອບສ່ວນເຂົ້າໃນການບໍລິຫານວຽກງານພາຍໃນເຂດດັ່ງກ່າວ ກໍຄືການປົກປັກຮັກສາ, ເວນຍາມ, ສັງເກດການ ໃນຂອບເຂດພະລາທິການ ໃຫ້ມີຄວາມຮັບປະກັນດ້ານວິຊາສະເພາະຕາມການຈັດຕັ້ງຂັ້ນເທິງມອບໝາຍ. ໂດຍການກ່າວຮັບຂອງທ່ານ ພົທ. ແສງເພັດ ອ້ອນສະຫວັນ ຫົວໜ້າການເມືອງກອງບັນຊາການທະຫານເມືອງຊຳເໜືອແລະສະແດງຄວາມຂອບໃຈມາຍັງທີມງານຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງຫົວພັນ ທີ່ຍາມໃດກໍໃຫ້ຄວາມເປັນຫ່ວງເປັນໄຍນຳພໍ່ແມ່ປະຊາຊົນກໍຄືພະນັກງານນັກຮົບ ທີ່ເຮັດໜ້າທີ່ປ້ອງກັນເວນຍາມ, ທຳການຜະລິດ, ເຮັດໜ້າທີ່ເປັນຮົ້ວປ້ອງກັນຊາດ ຮັບໃຊ້ຊາດ ຮັບໃຊ້ປະຊາຊົນ; ພ້ອມກັນນີ້, ທ່ານຍັງໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະນຳໃຊ້ເຄື່ອງດັ່ງກ່າວເຂົ້າໃນວຽກງານໃຫ້ເກີດປະໂຫຍດສູງສຸດ.

**(ນາງ ກຸກກິກ ບຸດດາໄຊ)**



## ທ່ານຮອງປະທານ...

(ຕໍ່ຈາກໜ້າ 1)

ແຫ່ງ ສປປ ລາວ ພ້ອມດ້ວຍຄະນະໃນຄັ້ງນີ້ເຊິ່ງເປັນການປະກອບສ່ວນສຳຄັນໃຫ້ແກ່ການເພີ່ມພູນຄູນສ້າງສາຍພົວພັນຮ່ວມມືທີ່ມີມູນເຊື້ອມາເປັນເວລາ 60 ກວ່າປີ ໃຫ້ນັບມື້ນັບມີປະສິດທິຜົນຍິ່ງໆຂຶ້ນ ແລະ ໄດ້ລາຍງານໃຫ້ຄະນະຊາບກ່ຽວກັບບັນດາຜົນສຳເລັດໃນການພັດທະນາດ້ານເສດຖະກິດຂອງມົງໂກລີ ໃນໄລຍະຜ່ານມາ.

ໃນນາມຕາງໜ້າໃຫ້ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຮູ້ສຶກເປັນກຽດຢ່າງສູງທີ່ໄດ້ມີໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ປະເທດມົງໂກລີເປັນຄັ້ງທຳອິດ ໃນນາມຮອງປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ຊຸດທີ IX, ຕີລາຄາສູງຕໍ່ຜົນການຮ່ວມມືອັນເປັນມູນເຊື້ອທີ່ດີລະຫວ່າງລາວ-ມົງໂກລີເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ, ພ້ອມທັງໄດ້ແຈ້ງສະພາບການທີ່ພົ້ນເດັ່ນພາຍໃນປະເທດມົງໂກລີໃຫ້ໄດ້ຮັບຊາບ; ທ່ານໄດ້ຕີລາຄາສູງ ແລະ ຊົມເຊີຍຢ່າງຈິງໃຈຕໍ່ຜົນສຳເລັດອັນໃຫຍ່ຫຼວງທີ່ປະຊາຊົນມົງໂກລີ ຍາດມາໄດ້ຕະຫຼອດໄລຍະຜ່ານມາ ເຊິ່ງເຫັນໄດ້ເສດຖະກິດມີການຂະຫຍາຍຕົວດີ, ລວມຍອດຜະລິດຕະພັນພາຍໃນ (GDP)ຂອງມົງໂກລີຂະຫຍາຍຕົວໃນອັດຕາ6,8% ໃນປີ2023, ຖານະບົດບາດຂອງມົງໂກລີນັບມື້ນັບພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ໃນໂລກ.

ຫຼັງຈາກນັ້ນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ທ່ານ ລ.ເມິງຄ໌ບາທາຣ໌ ຮອງປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ໄດ້ເຂົ້າຮ່ວມເປັນສັກຂີພະຍານພິທີລົງນາມໃນບົດບັນທຶກມອບ-ຮັບເຄື່ອງເຟີນີເຈີຂອງຂວັນຈາກສະພາແຫ່ງຊາດແຫ່ງສປປລາວ ມອບໃຫ້ແກ່ສະພາຄູຣານ ໃຫຍ່ແຫ່ງ ມົງໂກລີ, ໂດຍຜູ້ລົງນາມຝ່າຍລາວແມ່ນທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດແຫ່ງສປປລາວ,ຝ່າຍມົງໂກລີ ແມ່ນທ່ານ ຊ.ບັດບາທາຣ໌ ຮອງຫົວໜ້າຫ້ອງວ່າການສະພາຄູຣານໃຫຍ່ແຫ່ງມົງໂກລີ.

ໃນຕອນເຊົ້າຂອງວັນດຽວກັນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດແຫ່ງສປປລາວ ໄດ້ເຂົ້າຢ້ຽມຂໍ່ານັບພະນະທ່ານ ກອມບໍຈາວ ຊັງຕັງຊາທາຣ໌ ປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີເຊິ່ງທ່ານປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ໄດ້ສະແດງຄວາມຕ້ອນຮັບອັນອົບອຸ່ນຕໍ່ການຢ້ຽມຢາມ ແລະ ເຮັດວຽກຂອງທ່ານຮອງປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະໃນຄັ້ງນີ້ ທັງໄດ້ຕີລາຄາສູງຕໍ່ມູນເຊື້ອການພົວພັນຮ່ວມມືລະຫວ່າງ 2 ປະເທດ ກໍຄືລະຫວ່າງອົງການນິຕິບັນຍັດຂອງ 2 ປະເທດ ຕະຫຼອດໄລຍະຜ່ານມາ.

ທ່ານຮອງປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບທີ່ອົບອຸ່ນ, ສະໜິດສະໜົມຂອງປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ເຊິ່ງການຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາແຫ່ງຊາດແຫ່ງ ສປປ ລາວ ຄັ້ງນີ້ ເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອດີງາມລະຫວ່າງປະຊາຊົນ 2 ຊາດພວກເຮົາ; ທ່ານຍັງໄດ້ນຳເອົາຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ຄຳອວຍ ພອນໄຊອັນປະເສີດຈາກພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄປຍັງພະນະທ່ານປະທານສະພາຄູຣານໃຫຍ່; ທ່ານໄດ້ສະແດງຄວາມຊົມເຊີຍທີ່ໄດ້ເຫັນຜົນສຳເລັດຮອບດ້ານໃນການພັດທະນາປະເທດມົງໂກລີ ອັນໄດ້ເຮັດໃຫ້ໃບໜ້າຂອງປະເທດຊາດມີການປ່ຽນແປງຢ່າງຫຼວງຫຼາຍ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນນັບມື້ໄດ້ຮັບການປັບປຸງດີຂຶ້ນ, ບົດບາດອິດທິພົນຂອງປະເທດມົງໂກລີໃນເວທີພາກພື້ນ ແລະ ສາກົນ ນັບມື້ນັບສູງຂຶ້ນ. ທ່ານຮອງປະທານສະພາແຫ່ງຊາດລາວ ຍັງໄດ້ລາຍງານກ່ຽວກັບການພົບປະກັບທ່ານຮອງປະທານສະພາຄູຣານໃຫຍ່ແຫ່ງມົງໂກລີ, ເຊິ່ງທັງສອງຝ່າຍໄດ້ມີການປຶກສາຫາລືແລະແລກປ່ຽນບົດຮຽນກັນຫຼາຍບັນຫາແນໃສ່ຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືເຊິ່ງກັນ ແລະກັນໃນຂົງເຂດນິຕິບັນຍັດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ; ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຕໍ່ການຊ່ວຍເຫຼືອ, ສະໜັບສະໜູນຂອງປະຊາຊົນມົງໂກລີ ໃຫ້ແກ່ປະຊາຊົນລາວ ຕະຫຼອດການ.

ການມາຢ້ຽມຢາມແລະເຮັດວຽກໃນຄັ້ງນີ້ ເປັນການຜັນຂະຫຍາຍຜົນສຳເລັດຂອງການຢ້ຽມຢາມ ມົງໂກລີຢ່າງເປັນທາງການ ຂອງທ່ານປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໃນເດືອນກັນຍາປີ2023, ທັງເປັນການຕາງໜ້າ ລັດຖະບານ ສປປ ລາວ ກໍຄືສະພາແຫ່ງຊາດລາວ ນຳເອົາໂຕະຕັ່ງໄມ້ເນື້ອແຂງ ຈຳນວນ50ຊຸດ ໄດ້ມອບເປັນຂອງຂວັນ ໃຫ້ແກ່ສະພາຄູຣານໃຫຍ່ມົງໂກລີ ເນື່ອງໃນໂອກາດທີ່ສະພາຄູຣານໃຫຍ່ ຈະມີຈຳນວນສະມາຊິກເພີ່ມຂຶ້ນອີກ ໃນການເລືອກຕັ້ງຄັ້ງທີ່ຈະມາເຖິງໃນເດືອນມິຖຸນາ ໜ້ານີ້.

ໃນຕອນທ່ຽງຂອງວັນດຽວກັນ, ທ່ານ ເມິງຄ໌ບາທາຣ໌ ຮອງປະທານສະພາຄູຣານໃຫຍ່ແຫ່ງ ມົງໂກລີ ໄດ້ຈັດງານລ້ຽງອາຫານທ່ຽງຕ້ອນຮັບທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະດ້ວຍບັນຍາກາດແຫ່ງໄມຕີຈິດມິດຕະພາບອັນສະໜິດສະໜົມ.

ນອກຈາກການເຄື່ອນໄຫວຢູ່ນະຄອນຫຼວງອູລັນບາຕໍແລ້ວຍັງໄດ້ຢ້ຽມຊົມອານຸສອນສະຖານ ຈິງກິສຄານ ກະສັດຜູ້ຍິ່ງໃຫຍ່ຂອງມົງໂກລີ, ຢ້ຽມຢາມສະຖານທີ່ທ່ອງທ່ຽວ, ຫໍພິພິທະພັນແຫ່ງຊາດແລະພື້ນຖານວັດທະນະ ທຳຈຳນວນໜຶ່ງ, ຄະນະຍັງໄດ້ໄປຢ້ຽມຢາມພົບປະກັບພະນັກງານສະຖານທູດລາວ ປະຈຳມົງໂກລີອີກດ້ວຍ.

## ທາບທາມ...

(ຕໍ່ຈາກໜ້າ 1)

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນລະຫວ່າງວັນທີ 18-19 ມີນາ 2024 ທີ່ຫ້ອງປະຊຸມໃຫຍ່ສະພາປະຊາຊົນແຂວງບໍລິຄຳໄຊ ໂດຍການເປັນປະທານຮ່ວມຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ແລະ ທ່ານ ປອ. ສຸວັນນີ ໄຊຊະນະ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11, ປະທານສະພາປະຊາຊົນແຂວງບໍລິຄຳໄຊ; ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 11, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າ-ຮອງຫົວໜ້າພະແນກການຂອງອົງການປົກຄອງແຂວງ, ຂົງເຂດຕຸລາການ, ຄະນະນຳຈາກ 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຈົ້າເມືອງ, ສາມອົງການ ຈັດຕັ້ງມະຫາຊົນ, ສະຖາບັນການສຶກສາ ພ້ອມດ້ວຍພະນັກງານ-ລັດຖະກອນ ຈາກ ສພຊ ແລະ ສພຂ ເຂົ້າຮ່ວມ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ກ່າວເປີດກອງປະຊຸມ ແລະ ມີຄຳເຫັນວ່າ: ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແມ່ນນິຕິກຳພື້ນຖານຮັບປະກັນແກ່ການປະຕິບັດສິດ ແລະ ປະຊາທິປະໄຕດ້ານການເມືອງຂອງປະຊາຊົນລາວບັນດາເຜົ່າ; ສ່ວນກົດໝາຍອີກ 2 ສະບັບ ແມ່ນຕິດພັນໂດຍກົງກັບການກຳນົດໂຄງປະກອບ, ກົງຈັກການຈັດຕັ້ງ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ກໍຄືກົນໄກການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຖານະທີ່ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ທ່ານປະທານກອງປະຊຸມ ໄດ້ເນັ້ນຕື່ມວ່າ: 3 ກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ມີຄວາມສຳຄັນແລະມີຄວາມໝາຍຫຼາຍຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຍ້ອນວ່າຕິດພັນເຊິ່ງກັນ ແລະກັນ ເປັນຕົ້ນກ່ອນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຈະເຄື່ອນໄຫວໄດ້ ກໍຕ້ອງມີການເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເຊິ່ງແມ່ນປະຊາຊົນບັນດາເຜົ່າໄດ້ມອບສິດ ແລະ ອຳນາດໃຫ້ແກ່ຕົວແທນຂອງຕົນ ມາປະຕິບັດຢູ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຕາມລັດຖະທຳມະນູນແລະກົດໝາຍກຳນົດ; ສະນັ້ນ, ຕ້ອງໄດ້ມີການເລືອກຕັ້ງຈາກພົນລະເມືອງລາວຜູ້ມີອາຍຸ 18 ປີຂຶ້ນໄປ ຫຼືເອີ້ນວ່າຜູ້ມີສິດເລືອກຕັ້ງ, ບຸກຄະລາກອນເຫຼົ່ານັ້ນ ຈະເຄື່ອນໄຫວປະຕິບັດພາລະບົດບາດຂອງຕົນມີປະສິດທິພາບ ແລະ ປະສິດທິຜົນ ຫຼື ບໍ່ ກໍຕ້ອງມີນິຕິກຳເປັນບ່ອນອີງໃນການຈັດຕັ້ງປະຕິບັດສິດແລະໜ້າທີ່ຢ່າງຈະແຈ້ງ, ສອດຄ່ອງກັບສະພາບຕົວຈິງຂອງປະເທດເຮົາ.

ບັນດາຜູ້ເຂົ້າຮ່ວມ ໄດ້ສຸມໃສ່ປະກອບຄຳຄິດເຫັນຢ່າງຟົດຟື້ນຕໍ່ເນື້ອໃນມາດຕາຕ່າງໆຂອງກົດໝາຍ 3 ສະບັບ ໄປແຕ່ລະໝວດແຕ່ລະມາດຕາ ຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ຢ່າງມີຈຸດສຸມ ແລະ ກົງໄປກົງມາ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຕາມພາລະບົດບາດ, ສິດແລະໜ້າທີ່ຂອງສສຊ ແລະ ສສຂ ໃນໄລຍະໃໝ່ ສາມາດຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງກວ່າເກົ່າ ແນໃສ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ສູງຂຶ້ນ.

ກອງປະຊຸມຄັ້ງນີ້, ແມ່ນນຳໃຊ້ງົບປະມານຂອງໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

ໃນຕອນເຊົ້າຂອງວັນທີ 19 ມີນາ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ແລະ ທ່ານ ປອ. ສຸວັນນີ ໄຊຊະນະ ພ້ອມດ້ວຍຄະນະ ໄດ້ເຂົ້າວາງກະຕ່າດອກໄມ້ແລະຈູດທູບບູຊາຢູ່ອານຸສອນສະຖານທ່ານ ສີສົມພອນ ລໍວັນໄຊ ອະດີດກຳມະການກົມການເມືອງສູນກາງພັກຮຸ່ນທຳອິດ ເພື່ອເປັນການລະນຶກເຖິງຄຸນງາມຄວາມດີ ແລະ ສະແດງຄວາມຮູ້ບຸນ ຄຸນອັນໃຫຍ່ຫຼວງຂອງທ່ານທີ່ມີຕໍ່ພາລະກິດປົກປັກຮັກສາຮັບໃຊ້ປະເທດຊາດ ແລະ ປະຊາຊົນ.




**(ອານຸສອນ ພູມມີທອນ)**






# ທາບທາມຄຳເຫັນໃສ່ຮ່າງກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ ຢູ່ແຂວງສາລະວັນ




(ສພຊ) ໂດຍປະຕິບັດຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບປັບປຸງປີ 2021, ປະຕິບັດຕາມແຜນສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ຊຸດທີ IX ແຜນປັບປຸງກົດໝາຍຂົງເຂດສະພາແຫ່ງຊາດຮັບຜິດຊອບ ແລະ ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງຂອງສະພາແຫ່ງຊາດ ຊຸດທີ IX ແນໃສ່ປັບປຸງເຄື່ອງມືສຳຄັນໃຫ້ແກ່ການເຄື່ອນໄຫວຂອງສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງໃນຕໍ່ໜ້າ ໃຫ້ເປັນລະບົບ, ຄົບຖ້ວນ, ຮັດກຸມ ແລະ ສາມາດປະຕິບັດໄດ້ຢ່າງມີປະສິດທິພາບ, ປະສິດທິຜົນ; ໃນວັນທີ 18 ມີນາ 2024 ນີ້, ຢູ່ທີ່ສະໂມສອນຂອງເມືອງສາລະວັນ ແຂວງສາລະວັນ ສະພາແຫ່ງຊາດ ໄດ້ເປີດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ ຄື: ຮ່າງກົດໝາຍ ວ່າດ້ວຍສະພາແຫ່ງຊາດ, ຮ່າງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ຮ່າງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ໂດຍການເປັນຄະນະປະທານກອງປະຊຸມຂອງທ່ານ ພົຕ. ວົງສັກ ພັນທະວົງ ຄະນະປະຈຳສະພາແຫ່ງຊາດ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ ປະທານຄະນະສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງ 14, ປະທານສະພາປະຊາຊົນແຂວງສາລະວັນ, ເຂົ້າຮ່ວມຂອງທ່ານ ສົມໃຈ ອຸ່ນຈິດ ຮອງເຈົ້າແຂວງສາລະວັນ, ມີບັນດາສະມາຊິກສະພາແຫ່ງຊາດ, ຮອງປະທານສະພາປະຊາຊົນແຂວງ, ຮອງປະທານກຳມາທິການກົດໝາຍ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ 8 ເມືອງ, ອະດີດສະມາຊິກສະພາປະຊາຊົນແຂວງ, ຕາງໜ້າຈາກພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ຄະນະກົມ, ຄະນະເລຂາທິການ, ພ້ອມດ້ວຍພະນັກງານກອງເລຂາຄະນະຮັບຜິດຊອບສ້າງຮ່າງກົດໝາຍ ຈາກສະພາແຫ່ງຊາດແລະສະພາປະຊາຊົນແຂວງເຂົ້າຮ່ວມ.

ທ່ານ ພົຕ. ວົງສັກ ພັນທະວົງ ຄະນະປະຈຳສະພາແຫ່ງຊາດປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ໄດ້ກ່າວວ່າ: ຮ່າງກົດໝາຍ ຈຳນວນ 3 ສະບັບ ທີ່ນຳມາທາບທາມໃນຄັ້ງນີ້ມີຄວາມສຳຄັນແລະມີຄວາມໝາຍຫຼາຍຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຍ້ອນວ່າຕິດພັນເຊິ່ງກັນ ແລະ ກັນ ເປັນຕົ້ນກ່ອນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຈະເຄື່ອນໄຫວໄດ້ ກໍຕ້ອງມີການເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເຊິ່ງແມ່ນປະຊາຊົນບັນດາເຜົ່າ ໄດ້ມອບສິດ ແລະ ອຳນາດໃຫ້ແກ່ຕົວແທນຂອງຕົນມາປະຕິບັດຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາມລັດຖະທຳມະນູນແລະກົດໝາຍກຳນົດ; ໃນໄລຍະຜ່ານມາ ກົດໝາຍ 3 ສະບັບນີ້, ນັບແຕ່ວັນຮັບຮອງສະບັບທຳອິດເປັນຕົ້ນມາ ກໍໄດ້ຮັບການປັບປຸງເປັນແຕ່ລະໄລຍະມາຫຼາຍຄັ້ງ ເຖິງຢ່າງໃດກໍຕາມ, ການປັບປຸງໄລຍະຜ່ານມາ ກໍບໍ່ທັນໄດ້ປະຕິບັດສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ໂດຍສະເພາະຂັ້ນຕອນການຈັດຕັ້ງປະຕິບັດ ແລະທາບທາມກົດໝາຍ ບໍ່ທັນເຮັດຢ່າງກວ້າງຂວາງ ມີພຽງແຕ່ຄະນະຮັບຜິດຊອບທີ່ໄດ້ຖືກມອບໝາຍເປັນຜູ້ປັບປຸງ ແລ້ວກໍນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງ; ສະນັ້ນ, ຈຶ່ງເຮັດໃຫ້ມີບາງເນື້ອໃນບໍ່ທັນຮັດກຸມ, ບໍ່ຊັດເຈນ ແລະບໍ່ຈະແຈ້ງ ຈຶ່ງເຮັດໃຫ້ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນບາງດ້ານບໍ່ທັນມີຄຸນນະພາບເທົ່າທີ່ຄວນ; ກອງປະຊຸມການທາບທາມຮ່າງກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ ໃນຄັ້ງນີ້ ຈະໄດ້ດຳເນີນໄປເປັນເວລາ 2 ວັນ; ທ່ານຍັງໄດ້ຮຽກຮ້ອງມາ ບັນດາທ່ານທີ່ເຂົ້າຮ່ວມ ຈຶ່ງໄດ້ເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາ ເພື່ອຄົ້ນຄວ້າປະກອບຄຳເຫັນ ຕໍ່ແຕ່ລະເນື້ອໃນ, ແຕ່ລະໝວດ ແຕ່ລະມາດຕາ ຂອງແຕ່ລະກົດໝາຍ ຕາມວາລະກອງປະຊຸມໄດ້ກຳນົດໃຫ້ມີຈຸດສຸມ, ຄຳເຫັນຂອງບັນດາທ່ານຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ວິເຄາະ, ວິໃຈ ປັບປຸງກົດໝາຍແຕ່ລະສະບັບ ເພື່ອເຮັດໃຫ້ແຕ່ລະກົດໝາຍ ມີເນື້ອໃນຊັດເຈນ, ຄົບຖ້ວນ, ຮັດກຸມແລະສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ;

ກອງປະຊຸມໄດ້ຮັບຟັງບົດລາຍງານກ່ຽວກັບການປັບປຸງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາ ຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງ 3 ກົດໝາຍດັ່ງກ່າວດ້ວຍບັນຍາກາດອັນຟົດຟື້ນ;

ກອງປະຊຸມຄັ້ງນີ້ໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPs).

**(ດີລຳພົນ ພົມມະຈັນ)**



## ຄລສ ຫົວພັນ ສະຫຼຸບວຽກງານ ປະຈຳ 3 ເດືອນຕົ້ນປີ 2024

(ສພຊ) ວັນທີ 14 ມີນາ 2024 ຜ່ານມານີ້, ຄະນະເລຂາທິການສະພາປະຊາຊົນແຂວງຫົວພັນ (ຄລສ) ໄດ້ຈັດກອງປະຊຸມສະຫຼຸບວຽກງານຄະນະເລຂາທິການປະຈຳ 3 ເດືອນ ຕົ້ນປີ 2024 ແລະທິດທາງແຜນການ 3 ເດືອນໃນຕໍ່ໜ້າຂອງຕົນຂຶ້ນ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ກົ້ວມີໄຊ ກຳມະການຄະນະປະຈຳ ເລຂາທິການສະພາປະຊາຊົນແຂວງຫົວພັນ; ເຂົ້າຮ່ວມມີທ່ານ ສົມສັກ ດອນຈານິດກຳມະການພັກແຂວງ ເລຂາໜ່ວຍພັກ ຮອງປະທານສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກງານຄະນະເລຂາທິການສະພາປະຊາຊົນແຂວງ, ມີບັນດາທ່ານຄະນະເລຂາທິການ, ຫົວໜ້າ, ຮອງຫົວໜ້າຂະແໜງຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນ ສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບວຽກງານ 3 ເດືອນຕົ້ນປີ ແລະ ທິດທາງ 3 ເດືອນໃນຕໍ່ໜ້າ, ຜ່ານແຜນແບ່ງຄວາມຮັບຜິດຊອບພາຍໃນຂະແໜງການທີ່ຂຶ້ນກັບຄະນະເລຂາທິການ ຈາກນັ້ນ ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບ ແລະ ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຢ່າງກົງໄປກົງມາດ້ວຍຄວາມຮັບຜິດຊອບສູງພ້ອມນັ້ນປະທານກອງປະຊຸມໄດ້ສະຫຼຸບສັງລວມບັນດາຄຳຄິດເຫັນເພື່ອປັບປຸງແບບແຜນວິທີເຮັດວຽກພາຍໃນຄະນະເລຂາທິການ, ບັນດາຂະແໜງການ ຂອງສະພາປະຊາຊົນແຂວງໃຫ້ນັບມື້ດີຂຶ້ນ. ຫຼັງຈາກນັ້ນ, ຍັງໄດ້ຜ່ານຂໍ້ຕົກລົງຂອງທ່ານເຈົ້າແຂວງສະບັບເລກທີ 55 ລົງວັນທີ 15 ມັງກອນ 2024 ວ່າດ້ວຍການມອບໃບຍ້ອງຍໍໃຫ້ແກ່ບຸກຄົນມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ປະຈຳປີ 2023;

ກອງປະຊຸມໄດ້ຮັບຟັງການໂອ້ລົມ ຈາກທ່ານ ສົມສັກ ດອນຈານິ ທ່ານສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ບັນດາຜົນງານທີ່ຍາດມາໄດ້ ໃນໄລຍະ 3 ເດືອນຜ່ານມາ, ພ້ອມກັນນັ້ນຍັງໄດ້ເນັ້ນໜັກໃຫ້ຄະນະເລຂາທິການສືບຕໍ່ເຮັດວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນໃຫ້ເປັນປົກກະຕິ ແລະຕໍ່ເນື່ອງ ດ້ວຍຫຼາຍຮູບແບບ, ຫລາຍວິທີການ ແລະສືບຕໍ່ຮັກສາຄວາມສາມັກຄີເປັນປຶກແຜ່ນ ຊ່ວຍເຫຼືອເຊິ່ງກັນ ແລະກັນພ້ອມທັງປັບປຸງແບບແຜນວິທີເຮັດວຽກທັນເປັນທັນສະໄໝເທື່ອລະກ້າວ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານໃນຍຸກປັດຈຸບັນໃຫ້ດີຂຶ້ນກວ່າເກົ່າ.

## ມອບ-ຮັບ ໄຟຟ້າເຍືອງທາງໂຊລາເຊວ ໃຫ້ແກ່ໂຮງໝໍແຂວງຜົ້ງສາລີ



(ສພຊ) ວັນທີ 18 ມີນາ 2024 ທີ່ຫ້ອງປະຊຸມໂຮງໝໍແຂວງຜົ້ງສາລີໄດ້ຈັດພິທີມອບ-ຮັບ ໄຟຟ້າເຍືອງທາງໂຊລາເຊວ ລະຫວ່າງ ສະພາປະຊາຊົນແຂວງຜົ້ງສາລີ ກັບໂຮງໝໍແຂວງຜົ້ງສາລີ, ໂດຍການເປັນກຽດເຂົ້າຮ່ວມຂອງ ທ່ານ ທອງສີ ເສົາສຸລິພົມ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງ, ພ້ອມດ້ວຍຄະນະ; ເຂົ້າຮ່ວມມີຄະນະອຳນວຍການໂຮງໝໍແຂວງ, ພະນັກງານແພດໝໍ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ ທ່ານ ຄຳມາ ສຸລິວົງ ຮອງເລຂາທິການສະພາປະຊາຊົນແຂວງ, ຄະນະຮັບຜິດຊອບຕິດຕັ້ງໄຟຟ້າເຍືອງທາງໂຊລາເຊວ ໄດ້ລາຍງານກ່ຽວກັບຜົນການກະກຽມ ແລະ ດຳເນີນການຕິດຕັ້ງໄຟຟ້າເຍືອງທາງໂຊລາເຊວ ໃຫ້ໂຮງໝໍແຂວງ ສຳເລັດ 100% ມີຈຳນວນ 7 ຊຸດ ລວມເປັນມູນຄ່າທັງໝົດ 146.177.000 ກີບ, ເຊິ່ງຊຸດໄຟຟ້າໂຊລາເຊວ ດັ່ງກ່າວນີ້, ແມ່ນໄດ້ມາຈາກສະພາແຫ່ງຊາດ ໂດຍແມ່ນ ທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ປຸກລະດົມນຳເສດຖະກິດກອມລວມໄຊເສດຖາ ເພື່ອມອບໃຫ້ສະພາປະຊາຊົນແຂວງຜົ້ງສາລີ; ໃນພິທີໄດ້ເຊັນບົດບັນທຶກມອບ-ຮັບ ລະຫວ່າງສະພາປະຊາຊົນແຂວງ ກັບໂຮງໝໍແຂວງ ຕາງໜ້າສະພາປະຊາຊົນແຂວງໂດຍທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງ ແລະຕາງໜ້າໂຮງໝໍແຂວງ ເຊັນຮັບໂດຍ ທ່ານ ດຣ. ຄຳເຜັດ ຈອມອູ່ນມີໄຊ ອຳນວຍການໂຮງໝໍແຂວງ. ທັງນີ້, ເພື່ອເປັນການປະກອບສ່ວນໃນການພັດທະນາພາຍໃນບໍລິເວນໂຮງໝໍແຂວງໃຫ້ມີແສງສະຫວ່າງພຽງພໍແລະເພື່ອອຳນວຍຄວາມສະດວກໃຫ້ແກ່ປະຊາຊົນ, ພົນລະເມືອງທີ່ໃຊ້ບໍລິການປິ່ນປົວຢູ່ໂຮງໝໍແຂວງດີຂຶ້ນເທື່ອລະກ້າວ.

ໃນໂອກາດນີ້, ທ່ານ ທອງສີ ເສົາສຸລິພົມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໃນນາມສ່ວນຕົວແລະຄອບຄົວ ໄດ້ນຳເອົາຊຸດກິລາ ຈຳນວນ 70 ຊຸດ, ລວມເປັນມູນຄ່າ 7.600.000 ກີບ ແລະ ເງິນສົດ ຈຳນວນ 5.000.000 ກີບ ມອບໃຫ້ໂຮງໝໍແຂວງ ເພື່ອເປັນການຊຸກຍູ້ວຽກງານໂຮງໝໍແລະວຽກງານຂະບວນການກິລາໃຫ້ມີບັນຍາກາດຟົດຟື້ນກວ່າເກົ່າ.

**(ພອນແກ້ວປະເສີດ ສຸລິວົງ)**

# ມອບ-ຮັບໜ້າທີ່ເລຂາພັກເມືອງທົ່ງສາ



(ສພຊ) ໃນຕອນເຊົ້າຂອງວັນທີ 14 ມີນາ 2024 ນີ້, ເມືອງທົ່ງສາ ແຂວງໄຊຍະບູລີ ໄດ້ຈັດພິທີປະກາດຈັດຕັ້ງ, ມອບ-ຮັບໜ້າທີ່ລະຫວ່າງ ເລຂາພັກເມືອງ, ເຈົ້າເມືອງ ຜູ້ເກົ່າ ແລະ ຜູ້ໃໝ່ ຂຶ້ນຢູ່ທີ່ສະໂມສອນເມືອງ. ໃຫ້ກຽດເຂົ້າຮ່ວມເປັນປະທານຂອງ ສະຫາຍ ເພັງນີລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7, ປະທານສະພາປະຊາຊົນແຂວງໄຊຍະບູລີ, ມີກຳມະການພັກແຂວງ, ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ, ທີມງານຂອງແຂວງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານ, ທະຫານ, ຕຳຫລວດ, ຜູ້ອຳນວຍການໂຮງຮຽນ-ໂຮງໝໍ, ປະທານສະມາຄົມບຳນານ, ປະທານນັກທຸລະກິດໜຸ່ມ ແລະ ນາຍບ້ານທົ່ວເມືອງເຂົ້າຮ່ວມ.

ໃນພິທີ ສະຫາຍ ຫຸມ ມະໄລຄຳ ຫົວໜ້າຄະແໜງພັກ ຄະນະຈັດຕັ້ງແຂວງໄຊຍະບູລີ ໄດ້ຜ່ານຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຍົກຍ້າຍ ທ່ານ ຄຳຫຼ້າ ຜີວັນນາ ກຳມະກາພັກແຂວງ ເລຂາພັກເມືອງ ເຈົ້າເມືອງທົ່ງສາ ໄປຮັບໜ້າທີ່ໃໝ່ຢູ່ຫ້ອງວ່າການແຂວງໄຊຍະບູລີ; ຜ່ານຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຍົກຍ້າຍທ່ານພອນສະຫວັນ ໄຊສົມພັນກຳມະການພັກແຂວງ ຫົວໜ້າຫ້ອງວ່າການແຂວງ ໄປຮັບໜ້າທີ່ໃໝ່ຢູ່ຫ້ອງວ່າການເມືອງທົ່ງສາພ້ອມທັງແຕ່ງຕັ້ງເປັນເຈົ້າເມືອງໆ ທົ່ງສາ ແລະ ຜ່ານມະຕິຕົກລົງຂອງຄະນະປະຈຳພັກແຂວງ ວ່າດ້ວຍການບົ່ງຕົວແຕ່ງຕັ້ງ ສະຫາຍ ພອນສະຫວັນ ໄຊສົມພັນ ກຳມະກາພັກແຂວງ ເປັນເລຂາພັກເມືອງໆທົ່ງສາ.

ໃນໂອກາດນີ້, ທ່ານ ຄຳຫຼ້າ ຜີວັນນາ ກຳມະການພັກແຂວງ, ເລຂາພັກເມືອງ, ເຈົ້າເມືອງໆທົ່ງສາ (ຜູ້ເກົ່າ) ກໍໄດ້ຂຶ້ນຜ່ານບົດລາຍງານຂອງຜົນການນຳພາ-ຊີ້ນຳໃນໄລຍະຜ່ານມາໂດຍຫຍໍ້. ຫຼັງຈາກນັ້ນກໍໄດ້ຈັດພິທີເຊັນບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງ ທ່ານ ຄຳຫຼ້າ ຜີວັນນາ ກຳມະການພັກແຂວງເລຂາພັກເມືອງ ເຈົ້າເມືອງທົ່ງສາ (ຜູ້ເກົ່າ) ກັບທ່ານ ພອນສະຫວັນ ໄຊສົມພັນກຳມະການພັກແຂວງເລຂາພັກເມືອງ ເຈົ້າເມືອງທົ່ງສາ (ຜູ້ໃໝ່) ຢ່າງເປັນທາງການ.

ໃນຕອນທ້າຍ ສະຫາຍ ເພັງນີລັນ ຄຳພັນເພັງ ໄດ້ມີຄຳເຫັນເນັ້ນໜັກໃຫ້ເຈົ້າເມືອງຜູ້ໃໝ່ ຈົ່ງສືບຕໍ່ຮັກສາມູນເຊື້ອທີ່ຜູ້ເກົ່າຍາດມາໄດ້ ແລະ ສືບຕໍ່ເພີ່ມທະວີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງໃຫ້ສູງຂຶ້ນ, ເປັນແບບຢ່າງນຳໜ້າໃນການຝຶກຝົນຫຼໍ່ຫລອມຕົນເອງທາງດ້ານຄຸນທາດການເມືອງ-ຄຸນສົມບັດ, ສິນທຳປະຕິວັດ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ເອົາໃຈໃສ່ປັບປຸງແບບແຜນນຳພາ, ແບບແຜນວິທີເຮັດວຽກໃຫ້ສອດຄ່ອງ ແລະ ແທດເໝາະກັບສະພາບຕົວຈິງ, ທັງເພີ່ມທະວີຄວາມສາມັກຄີພາຍໃນໝູ່ຄະນະເພື່ອພັດທະນາວຽກງານຮອບດ້ານຂອງເມືອງທົ່ງສາໃຫ້ເຂັ້ມແຂງ, ໜັກແໜ້ນຂຶ້ນເລື້ອຍໆ.

**(ກິດຕິສັກ ບົວໄລ)**

# ກອງປະຊຸມຄະນະກຳມະການ ແລະ ຄະນະເລຂາທິການ ສະພາປະຊາຊົນແຂວງບໍລິຄຳໄຊ ປະຈຳປີ 2023



(ສພຊ) ກອງປະຊຸມຂອງຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ໄດ້ຈັດຂຶ້ນໃນວັນທີ 12 ມີນາ 2024 ນີ້, ຢູ່ທີ່ສະພາປະຊາຊົນແຂວງບໍລິຄຳໄຊ ໂດຍການເປັນປະທານຂອງທ່ານ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງບໍລິຄຳໄຊ ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ, ສະມາຊິກສະພາປະຊາຊົນແຂວງບໍລິຄຳໄຊ ແລະ ຕາງໜ້າພະແນກການອ້ອມຂ້າງແຂວງ ພ້ອມດ້ວຍຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຈາກທ່ານນາງ ຟອງສະໝຸດ ພົງວິຈິດ ກຳມະການພັກແຂວງ, ເລຂາທິການສະພາປະຊາຊົນແຂວງ ເຊິ່ງທ່ານໄດ້ລາຍງານຫຍໍ້ວ່າ: ໂດຍໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕາມພາລະບົດບາດສິດ ແລະ ໜ້າທີ່ຂອງຕົນ ໃນຖານະທີ່ເປັນເສນາທິການໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງກໍຄືສະພາປະຊາຊົນແຂວງ, ໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງກໍຄືສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄຸ້ມຄອງວຽກງານບໍລິຫານ ແຜນການ ແລະ ການເງິນ, ພ້ອມນີ້ ຍັງໄດ້ປັບປຸງແບບແຜນວິທີເຮັດວຽກມີການແບ່ງງານແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ ປະສານສົມທົບກັບຫ້ອງວ່າການແຂວງພາກສ່ວນທີ່ກ່ຽວຂ້ອງແຕ່ລະໄລຍະເປັນຢ່າງດີ ປະສານສົມທົບກັບບັນດາຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງ ແລະ ປັບປຸງນິຕິກຳຂອງສະພາປະຊາຊົນແຂວງໄດ້ແຕ່ງຕັ້ງຄະນະປະສານງານຮ່ວມກັນ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານຂອງຕົນ ແລະ ນິຕິກຳອື່ນໆໄດ້ທັງໝົດ 20 ກວ່າສະບັບ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກະກຽມໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງລົງພົບປະ-ປະຊາຊົນ ແລະ ໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 -6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຜ່ານການຈັດຕັ້ງປະຕິບັດສາມາດປະຕິບັດໄດ້ 132 ຈຸດ ມີ 101 ບ້ານ 9 ກົມກອງ 3 ສຳນັກງານ ແລະ ປະຕິບັດຢູ່ຂັ້ນແຂວງໄດ້ 19 ຈຸດ ເຊິ່ງມີຜູ້ເຂົ້າຮ່ວມຮັບຟັງ 9.396 ຄົນ, ຍິງ 3.546 ຄົນ ພ້ອມນີ້ຍັງໄດ້ເອົາໃຈໃສ່ໃນການສັງລວມຄຳສະເໜີຂອງປະຊາຊົນ ທີ່ສະເໜີຜ່ານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແລະສະມາຊິກສະພາປະຊາຊົນແຂວງ ເພື່ອສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງພິຈາລະນາແກ້ໄຂ ແລະ ອະທິບາຍຊີ້ແຈ້ງຕໍ່ປະຊາຊົນ ແລະ ວຽກງານອື່ນໆ. ພ້ອມນີ້ ກອງປະຊຸມໄດ້ຜັດປ່ຽນກັນຂຶ້ນລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນເພີ່ມທະວີການປະສານສົມທົບຢ່າງກົມກຽວເຊິ່ງກັນ ແລະ ກັນ ລະຫວ່າງກົງຈັກການຈັດຕັ້ງ ພາຍໃນສະພາປະຊາຊົນແຂວງ ລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງກັບຫ້ອງວ່າການແຂວງ, ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດແຜນການໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ເອົາໃຈໃສ່ຈັດຕັ້ງປະຕິບັດລະບອບແບບແຜນວິທີເຮັດວຽກ ແຕ່ລະໄລຍະ ພື່ອຮັບປະກັນການປະຕິບັດວຽກງານໃຫ້ມີປະສິດທິຜົນ ຈາກນັ້ນ, ກອງປະຊຸມໄດ້ເປັນເຈົ້າການສຸມສະຕິປັນຍາເຂົ້າໃສ່ການຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງສ້າງສັນ ແລະ ຊັກຖາມບັນດາພະແນກການຢ່າງກົງໄປກົງມາຕໍ່ບັນຫາທີ່ນຳມາປຶກສາຫາລືໃນກອງປະຊຸມຄັ້ງນີ້; ເຊິ່ງເປັນການສະແດງໃຫ້ເຫັນຄວາມຮຽກຮ້ອງຕ້ອງການ ແລະ ຄວາມມຸ່ງມາດປາຖະໜາຂອງພໍ່ແມ່ປະຊາຊົນ; ພາກສ່ວນກ່ຽວຂ້ອງກໍໄດ້ຂຶ້ນຊີ້ແຈງທຸກໆບັນຫາທີ່ຕັ້ງຂຶ້ນດ້ວຍຄວາມສ້າງສັນເຮັດໃຫ້ການພິຈາລະນາ-ຮັບຮອງເອົາບັນຫາຕ່າງໆ ບົນຈິດໃຈແຫ່ງຄວາມເປັນເອກະພາບທາງດ້ານທັດສະນະ, ແນວຄິດ, ລະບຽບຫຼັກການ ແລະ ຄວາມຮັບຜິດຊອບສູງ.

**(ນາງ ໂສລະຢ່າ)**




# ປຶກສາຫາລື ແລະ ກຳນົດໜ້າວຽກແຕ່ລະຂະແໜງ ຂອງສະພາປະຊາຊົນແຂວງໄຊສົມບູນ



(ສພຊ) ໃນວັນທີ 12 ມີນາ 2024 ນີ້, ສະພາປະຊາຊົນແຂວງໄຊສົມບູນ ໄດ້ຈັດກອງປະຊຸມປຶກສາຫາລື ແລະ ກຳນົດໜ້າວຽກແຕ່ລະຂະແໜງຂອງສະພາປະຊາຊົນແຂວງໄຊສົມບູນໂດຍພາຍໃຕ້ການເປັນປະທານ ຂອງທ່ານ ນາງ ຂັນກາບ ໄຊຍະກຸມມານ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18, ຄະນະປະຈຳ ແລະ ພ້ອມທັງເປັນເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະຕາງໜ້າຈາກພະແນກພາຍໃນແຂວງ, ມີທ່ານ ສົມດີ ຈັນທະວົງ ຄະນະປະຈຳ ສສຂປະຈຳເຂດເລືອກຕັ້ງເມືອງທ່າໂທມ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ມີ ທ່ານ ບີ ເຮີ່ ແລະ ທ່ານ ຢີຊົ່ງ ຕົ່ງເລັ່ງ ຮອງເລຂາທິການ; ບັນດາຫົວໜ້າ, ຮອງຫົວໜ້າຂະແໜງການຕ່າງໆພາຍໃນສະພາປະຊາຊົນແຂວງໄຊສົມບູນ ເຂົ້າຮ່ວມຢ່າງພ້ອມພຽງ.

ການຈັດກອງປະຊຸມໃນຄັ້ງນີ້ ແມ່ນມີຈຸດປະສົງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກະຕິກາ ແລະ ລະບຽບການທີ່ພັກ-ລັດ ໄດ້ກຳນົດໄວ້ໃນກົດໝາຍຂອງລັດຖະກອນທີ່ຕ້ອງປຶກສາຫາລື ໃນການຈັດຕັ້ງປະຕິບັດວຽກງານ, ການປະສານງານ, ການບໍລິການຂອງບັນດາຂະແໜງການຕ່າງໆ ຂອງບັນດາພະແນກການ, ອົງການ, ກົມ

ອ່ານຕໍ່ໜ້າ 7

# ສພຂ ຫຼວງນໍ້າທາ ມອບເຄື່ອງ ພະລັງງານໄຟຟ້າແສງຕາເວັນ ໃຫ້ ປສກ ແຂວງ



(ສພຊ) ວັນທີ 5 ມີນາ 2024 ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫຼວງນໍ້າທາ ໄດ້ຈັດພິທີມອບ-ຮັບເຄື່ອງພະລັງງານໄຟຟ້າແສງຕາເວັນ ໃຫ້ກອງບັນຊາການປ້ອງກັນຄວາມສະຫງົບແຂວງຫຼວງນໍ້າທາ ໂດຍການມອບຂອງທ່ານ ຄໍາຟອງ ອິນມານີ ປະທານສະພາປະຊາຊົນແຂວງຫຼວງນໍ້າທາ ແລະ ຮັບໂດຍທ່ານ ພັອ. ປອ. ອາຄົມ ວົງພະຈັນ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ. ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ຄະນະກອງບັນຊາການ ປກສ ແຂວງ ແລະ ວິຊາການກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພິຍານຢ່າງພ້ອມພຽງ ເຊິ່ງເຄື່ອງທີ່ນໍາມອບໃນຄັ້ງນີ້ແມ່ນໄດ້ຈາກການຊ່ວຍເຫຼືອຂອງສະພາແຫ່ງຊາດ.

ໃນການມອບເຄື່ອງພະລັງງານໄຟຟ້າແສງຕາເວັນຄັ້ງນີ້ ແມ່ນເພື່ອນໍາໄປມອບໃຫ້ກອງກໍ່ສ້າງຮາກຖານ 914 ທີ່ປະຈໍາຢູ່ເມືອງລອງ ແຂວງຫຼວງນໍ້າທາ ເພື່ອເປັນການປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານປ້ອງກັນຄວາມສະ ຫງົບ ໃຫ້ມີປະສິດພາບສູງຂຶ້ນ ເຊິ່ງອຸປະກອນໄຟຟ້າແສງຕາເວັນມອບໃນຄັ້ງນີ້ປະກອບມີ ຈໍານວນ 2 ຊຸດ ມີແຜງໂຊລາເຊວຈໍານວນ 4 ແຜງ (ຊຸດລະ 2 ແຜງ), ຖານຈັບແຜງໂຊລາເຊວ ຈໍານວນ 2 ອັນ, ໝໍ້ໄຟ ຈໍານວນ 4 ໜ່ວຍ (ຊຸດລະ 2 ໜ່ວຍ), ກ່ອງໃສ່ໝໍ້ໄຟ ຈໍານວນ 4 ອັນ (ຊຸດລະ 2 ອັນ), ຮາວຈັບດອກໄຟ ຈໍານວນ 2 ອັນ, ດອກໄຟຈໍານວນ 2 ດອກ, ເສົາໄຟ ຈໍານວນ 2 ເສົາ, ຂໍ້ຕໍ່ເສົາ-ແຜງ ຈໍານວນ 2 ອັນ, ສາຍໄຟ ຈໍານວນ 30 ແມັດ (ຊຸດລະ 15 ແມັດ), ກ່ອງບັນຊາລະບົບ ຈໍານວນ 2 ອັນ, ເຫຼັກເສັ້ນປ້ອງອ້ອຍ ຈໍານວນ 4 ອັນ, ນັອດຈັບຕີນເສົາ ຈໍານວນ 8 ໂຕ, ນັອດປະກອບ ຈໍານວນ 2 ຖົງ ແລະ ແຜ່ນເຫຼັກຮອງຕີນເສົາ ຈໍານວນ 2 ແຜ່ນ ລວມມູນຄ່າທັງໝົດ 37.690.000 ກີບ.

**(ນາງ ອໍາພອນ ສີປະເສີດ)**

## ປຶກສາຫາລື...

(ຕໍ່ຈາກໜ້າ 6)

ກອງ ທີ່ຕ້ອງໄດ້ເປີດກອງປະຊຸມຂຶ້ນ ແລະ ກໍານົດໜ້າວຽກໃນແຕ່ລະຂະແໜງຂອງຕົນ. ສ່ວນສະພາປະຊາຊົນແຂວງໄຊສົມບູນ ແມ່ນໄດ້ມອບໃຫ້ຄະນະກໍາມະການເສດຖະກິດແຜນການແລະການເງິນ ປັບປຸງພາລະບົດບາດການເຄື່ອນໄຫວຂອງຂະແໜງການຕົນໃຫ້ລະອຽດຈະແຈ້ງຂຶ້ນຕື່ມ; ຂະແໜງບໍລິຫານ-ການເງິນຕ້ອງວິໄຈ-ໄຈແຍກໜ້າວຽກຂອງຕົນ ໃຫ້ອອກເປັນ 3 ໜ້າວຽກໃຫຍ່; ແຕ່ງຕັ້ງຄະນະຮັບຜິດຊອບການຂຽນກໍານົດຕໍາແໜ່ງງານ ແລະ ມອບວຽກງານການຂຽນກໍານົດຕໍາແໜ່ງງານໃຫ້ ທ່ານ ຍີຊົ່ງ ຕົ່ງເລັ່ງ ຮອງເລຂາທິການສະພາປະຊາຊົນແຂວງ ເປັນຜູ້ຮັບຜິດຊອບ ແລະ ພົວພັນປະສານງານ ກັບບັນດາຄະນະກໍາມະການ ເພື່ອຄວາມລະອຽດອອນ, ຊອດຄ່ອງໃນການປະຕິບັດຈັດຕັ້ງ ແລະ ເພື່ອໃຫ້ແທດເໝາະກັບຄວາມເປັນຈິງ. ກອງປະຊຸມ ໄດ້ພ້ອມກັນປະກອບຄໍາຄິດຄໍາເຫັນກັນຢ່າງກົງໄປກົງມາ ແລະ ມີຈຸດສຸມ ກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບກັນ ມອບໃຫ້ແຕ່ລະຂະແໜງການຕ່າງໆພາຍໃນສະພາປະຊາຊົນແຂວງ ເລີ່ມກໍານົດໜ້າວຽກຂອງຕົນ ໃຫ້ຖືກຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເຮັດໃຫ້ວຽກງານໄດ້ຮັບປະສິດທິພາບ ແລະ ປະສິດຕິຜົນສູງກວ່າເກົ່າ.

**(ນາງ ອໍາໄພພອນ ແກ້ວວິໄລ)**







# ສພຂ ຄໍາມ່ວນ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງມະຫາໄຊ

(ສພຊ) ໃນລະຫວ່າງວັນທີ 11-14 ມີນາ 2024 ນີ້, ທ່ານ ນາງ ບັງອອນ ໄຊຍະສິດ ກໍາມະການປະຈໍາພັກແຂວງ ຮອງປະທານຄະນະສະຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 12 ແຂວງຄໍາມ່ວນ (ຄສຊຂ 12) ຮອງປະທານສະພາປະຊາຊົນແຂວງຄໍາມ່ວນ ແລະທ່ານອິນທະວົງ ພົມມະຈັນ ຮອງເລຂາພັກເມືອງ ປະທານກວດກາພັກ-ລັດເມືອງ ທັງເປັນຫົວໜ້າຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈໍາເຂດເລືອກຕັ້ງເມືອງມະຫາໄຊແຂວງຄໍາມ່ວນ ໄດ້ເຄື່ອນໄຫວໄປພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ II ຢູ່ 8 ຈຸດ ຄື: ຫ້ອງວ່າການປົກຄອງເມືອງມະຫາໄຊ ແລະ ບ້ານນາກະທ້າງທົ່ງ, ໝັ້ນ, ໂພນເມືອງ, ນາສະຖຸງ, ໂພນສະໜົມ, ອີລານ ແລະ ບ້ານຜານາງ; ໂດຍມີທ່ານສົມບູນ ແກ້ວວົງສາ ເຈົ້າເມືອງມະຫາໄຊ, ພ້ອມດ້ວຍບັນດາທ່ານຄະນະປະຈໍາພັກເມືອງ, ກໍາມະການພັກເມືອງ, ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ພະນັກງານຫຼັກແຫ່ງຂອງເມືອງ, ອໍານາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າເຂົ້າຮ່ວມ 1060 ເທື່ອຄົນ ຍິງ 495 ເທື່ອຄົນ.

ກອງປະຊຸມໄດ້ຮັບຟັງການລາຍງານໂດຍສັງເຂບຂອງເມືອງ ແລະ ບ້ານ, ກ່ຽວກັບສະພາບທີ່ຕັ້ງ ແລະ ຈຸດພິເສດ, ມີດ້ານການເມືອງ-ແນວຄິດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ ແລະ ທິດທາງແຜນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ, ຊຶ່ງເຫັນໄດ້ດ້ານຈັດຕັ້ງປະຕິບັດມີທັງຂໍ້ສະດວກ ແລະ ຂໍ້ຄົງຄ້າງ, ມີວຽກງານຈຸດສຸມໃນຕໍ່ໜ້າທີ່ຈະຕ້ອງໃຫ້ສໍາເລັດ. ພ້ອມນັ້ນ, ກອງປະຊຸມໄດ້ຮັບຟັງຄໍາຄິດ-ຄໍາເຫັນ ແລະ ຄໍາສະເໜີເປັນຕົ້ນດ້ານການກໍ່ສ້າງພື້ນຖານໂຄງລ່າງຂອງເມືອງ.




ຈາກນັ້ນ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ກໍໄດ້ຜັດປ່ຽນເຜີຍແຜ່ເນື້ອໃນຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ II ເຜີຍແຜ່ໃຫ້ປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ-ຕໍາຫຼວດ ໄດ້ຮັບຮູ້ເຊື່ອມຊຶມ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາຫຼາຍບັນຫາສໍາຄັນທີ່ເປັນພື້ນຖານຂອງຊາດ ເປັນຕົ້ນ: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານໂດຍສັງເຂບຂອງລັດຖະບານກ່ຽວກັບສະພາບການເຄື່ອນໄຫວປະຕິບັດແຜນພັດທະນາເສດຖະກິດ-ສັງຄົມທີ່ພົ້ນເດັ່ນໄລຍະກາງສະໄໝ 5 ປີ (2021-2023) ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025, ການເຄື່ອນໄຫວປະຈໍາປີ 2023 ແລະ ທິດທາງແຜນການປະຈໍາປີ 2024; ບົດລາຍງານການ ຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2023) ແລະ ທິດທາງແຜນການຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈໍາປີ 2003 ແລະ ທິດທາງແຜນການປີ 2024 ຂອງອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ຂອງສະພາແຫ່ງຊາດ, ການສ້າງ ແລະ ປັບປຸງກົດໝາຍ ແລະ ບັນຫາອື່ນໆ.

ໃນໂອກາດດັ່ງກ່າວ, ທ່ານ ນາງ ບັງອອນ ໄຊຍະສິດ ໄດ້ມີຄໍາເຫັນໂອ້ລົມ ແລະ ໃຫ້ທິດຊີ້ນໍາຕໍ່ອົງການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕໍ່ກັບບັນຫາການພັດທະນາເສດຖະກິດ-ສັງຄົມຂອງເມືອງ ແລະ ການເກັບລາຍຮັບເຂົ້າງົບປະມານໃຫ້ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ວາງໄວ້ໃຫ້ສໍາເລັດ; ອໍານາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນເມືອງມະຫາໄຊຈົ່ງຮັກສາມູນເຊື້ອຄວາມສາມັກຄີເປັນປົກແຜນ, ໃນການສ້າງສາພັດທະນາບ້ານ, ພ້ອມນັ້ນ, ທ່ານຍັງໄດ້ເໜັ້ນໜັກໃຫ້ອໍານາດການປົກຄອງບ້ານ ເປັນແບບຢ່າງໃນການພັດທະນາບ້ານ ເອົາໃຈໃສ່ສຶກສາອົບຮົມພໍ່ແມ່ປະຊາຊົນໃຫ້ເຊື່ອມຊຶມເຂົ້າໃຈແຈ້ງ ແລະ ກໍາແໜ້ນຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ແລະ ບັນດານິຕິກໍາຕ່າງໆໃຫ້ເລິກເຊິ່ງ, ຊຸກຍູ້ສົ່ງເສີມໃຫ້ລູກຫຼານໄດ້ເຂົ້າສຶກສາຮໍ່າຮຽນຢ່າງເປັນປົກກະຕິ ແລະ ຈັດຕັ້ງປະຕິບັດວຽກງານແຕ່ລະຂົງເຂດໃຫ້ບັນລຸຕາມເປົ້າໝາຍເປັນຕົ້ນຂົງເຂດກະສິກໍາ, ສ້າງໃຫ້ເປັນສິນຄ້າແປຮູບໃຫ້ມີມູນຄ່າສູງຂຶ້ນ ເພື່ອເຮັດໃຫ້ປະຊາຊົນມີຊີວິດການເປັນຢູ່ທີ່ດີຂຶ້ນ.

**(ເອື້ອ ມະໂນສິງ)**






# ອາຫານມີພິດ ກິນຫຼາຍໄປໄວ

# ດົ້ນກົບເມກ

ອາຫານທະເລຈານໂປດ ອາດມີໂທດແຝງຢູ່ ພາໃຫ້ສຸຂະພາບເສື່ອມໂຊມຕາຍໄວ ເພາະມີສານເຄມີແຊ່ໄວ້ເພື່ອຮັກສາອາຫານໃຫ້ໄດ້ຂາຍໄດ້ດົນນານ ບໍ່ໄດ້ຄຳນຶງວ່າ: ຜູ້ກິນຈະເປັນແນວໃດ? ຂໍແຕ່ເປັນຜູ້ຂາຍໄດ້ກຳໄລກໍພໍ, ສານປົນເປື້ອນໃນອາຫານ(Contaminants) ທີ່ຕິດມາໃນອາຫານ ໃນຂັ້ນຕອນການຜະລິດ-ຂົນສົ່ງ ຫຼື ເກັບຮັກສາຍາວນານ ຢ່າລືມວ່າ ບາງຊະນິດ ບໍລິໂພກໃນປະລິມານຫຼາຍ ກໍຕາຍໄດ້ທັນທີ, ຜູ້ຂຽນໄດ້ຍິນໝູ່ເພື່ອນເລົ່າສູ່ຟັງ ມີຫຼາຍກໍລະນີໄດ້ຫາມຂຶ້ນລົດ ສົ່ງໂຮງໝໍຍ້ອນກິນອາຫານມີພິດ.

ອາຫານມີພິດ ເວົ້າສະເພາະອາຫານທະເລ ທີ່ປົນເປື້ອນສານເຄມີເຊັ່ນ: ສານຟອກໃຫ້ຂາວ, ສານເຄມີຟໍມາລິນ ເຮັດໃຫ້ຊີ້ນຮັດ-ຜັກສີຂຽວສົດໃສງາມ ຖ້າໃຜບໍລິໂພກຫຼາຍພາໃຫ້ເກີດພິດຕໍ່ຮ່າງກາຍ-ລະບົບທາງເດີນອາຫານສົ່ງຜົນໃຫ້ເຈັບທ້ອງປວດຮາກ-ວຽນຫົວ, ສານຕົກຄ້າງຢາຂ້າແມງໄມ້-ປາບສັດຕູພືດປົນເປື້ອນມານຳຜັກ ກໍອັນຕະລາຍ ກ່ອນຊື້ມາບໍລິໂພກຕ້ອງຄິດ-ເລືອກໃຫ້ດີທຸກມື້ນີ້ ອັນຕະລາຍອ້ອມໂຕບາງເທື່ອບໍ່ປອດໄພທາງຊັບສິນເງິນຄຳ; ບໍ່ປອດໄພທາງອາຫານ, ບໍ່ປອດໄພທາງທຸລະກິດວຽກງານຄິດບໍ່ທັນໝູ່ ເຂົາກໍສໍ້ໂກງໄປກິນ, ຜູ້ມີປາລະມີເໜືອກວ່າ ກໍກຽມແຕ່ຊິລັງແກຜູ້ອ່ອນກວ່າ ຍ້ອນຄວາມໂລບເຂົ້າສິງ ຍ້ອນກະແສວັດຖຸນິຍົມ-ບໍລິໂພກນິຍົມ ກວມຄວາມຄິດ ຈຶ່ງບໍ່ຄິດອັນຖືກອັນຄວນ ເຫັນແກ່ໄດ້ຝ່າຍດຽວ, ສານພິດ-ສານເຄມີ ໃນພືດຜັກ-ອາຫານ ຊີ້ນ, ອາຫານທະເລ, ສານບໍແຣັກ ເຮັດໃຫ້ຊີ້ນໝູ-ງົວ-ປາ ມີສີສັນສວຍງາມ ລົດຊາດດີ-ເກັບໄວ້ໄດ້ດົນ ເຊິ່ງຢ່າລືມວ່າສານນີ້ກໍ່ໃຫ້ເກີດມະເຮັງ ປັດຈຸບັນບ້ານເຮົາມີຮ້ານອາຫານປະເພດຈຸ່ມ-ປີ້ງຫຼາຍ ໂຄສະນາກິນຈຸໃຈ, ກິນແຊບກິນຫຼາຍຈ່າຍໜ້ອຍ ແຕ່ຖ້າອາຫານບໍ່ຖືກສຸຂະອະນາໄມລະວັງຈະໄດ້ຈ່າຍຫຼາຍຕື່ມຢູ່ໂຮງໝໍ.

ສັງລວມວ່າ ຜູ້ຂຽນພຽງຢາກໃຫ້ໝູ່ເຮົາບໍລິໂພກຢ່າງມີສະຕິ ບໍ່ແມ່ນວ່າມັນລາຄາຖືກ-ມັນແຊບ ແລ້ວໂມ່ມໃສ່ທ້ອງຢ່າງດຽວ ເພາະວ່າຜູ້ຂາຍເຂົາມຸ່ງແຕ່ກຳໄລ ເຂົາບໍ່ໄດ້ຕິດຕາມຜົນຜູ້ກິນຈະເປັນແນວໃດ-ຄັນມີກວດກາເຄັ່ງຄັດຄືຊິດີນໍ!





## ຂຽນຄຳລາວໃຫ້ຖືກ

# ດູແສງ

| ຖືກ | ຜິດ |
|---|---|
| ໃກ້ຊິດ | ໃກ້ສິດ |
| ສິດເສລີພາບ | ຊິດເສລີພາບ |
| ຂ້ຽວເຂັດ | ຄ້ຽວເຂັດ |
| ຄ້ຽວໝາກ | ຂ້ຽວໝາກ |
| ໜ້າຫຼ່າ | ໜ້າລ່າ |
| ລ່າເມືອງຂຶ້ນ | ຫຼ່າເມືອງຂຶ້ນ |
| ເຫືອກແຂ້ວ | ເຂືອກແຂ້ວ |
| ເຂືອກສວນ | ເຫືອກສວນ |
| ຂູດໝາກພ້າວ | ຄູດໝາກພ້າວ |
| ແນວຄູດໜ້າ | ແນວຂູດໜ້າ |




# ນາຍໜ້າ – ຊິບປິ້ງ

"ເປັນແນວໃດລຸງຄຳ, ຫວ່າງນີ້ ?"

"ບໍ່ປານໃດຫຼານເອີຍ, ເຈັບອອດໆແອດໆຕາມປະສາຜູ້ເຖົ້າແກ່ຊະລາການນີ້ແຫຼະ!"

"ໂອ້ ! ຟັງສຽງເວົ້າຂອງລຸງແລ້ວ ສິແຫບໆ ບໍ່ແມ່ນເປັນຫວັດບໍ່ ?"

"ກະຊິແມ່ນແນວນັ້ນລະ, ອາກາດປ່ຽນຍາມໃດ ຫວັດລົງຄຳຖາມຂ່າວໂລດ !"

"ມື້ນີ້ວ່າຊິມາຖາມຄຳສັບກັບລຸງ ກະຄືຊິໄດ້ໂຈະນໍ !"

"ຫຼານຊິຖາມກ່ຽວກັບຄຳໃດລະ ?"

"ຄຳທີ່ກຳລັງມາແຮງໃນຫວ່າງນີ້ກໍແມ່ນ 'ນາຍໜ້າ' ກັບ 'ຊິບປິ້ງ' ນີ້ລະລຸງ !"

"ໂອ້ ! ສອງຄຳນີ້ຫວາ ?"

"ແມ່ນແລ້ວ, ລຸງ! ຊ່ອຍອະທິບາຍສູ່ຟັງແດ່ ຫຼາຍຄົນກະໃຫ້ຄວາມສົນໃຈ"

"ໄດ້ໆ, ຫຼານ ! ແຕ່ໃຫ້ລຸງໄດ້ກິນນໍ້າອຸ່ນໆລ່ອງຄໍກ່ອນເດີ !" ກ່າວສຸດ, ລຸງຄຳກໍຍົກຈອກນໍ້າອຸ່ນຂຶ້ນດື່ມ ແລະກໍໄດ້ສາທະຍາຍກ່ຽວກັບສອງຄຳສັບທີ່ບຸນຍືນຂ້ອງໃຈ ເຊິ່ງມີລາຍລະອຽດດັ່ງນີ້:

'ນາຍໜ້າ' ເປັນຄຳປະສົມປະເພດຄຳນາມ ໝາຍເຖິງ "ຜູ້ຕິດຕໍ່ຊື້ຂາຍແທນບຸກຄົນອື່ນ ໂດຍໄດ້ຮັບຄ່າຊົດເຊີຍເວລາທີ່ເສຍໄປຈາກການຊື້ຂາຍນັ້ນ" ເຊັ່ນ:

- ຄ້ອງຄຳເປັນນາຍໜ້າຊື້ຂາຍທີ່ດິນ.
- ເຮັດວຽກເປັນນາຍໜ້າຂາຍດິນຂາຍເຮືອນຈັ່ງແມ່ນໄດ້ເງິນດີ.

ພ້ອມກັນນັ້ນ, 'ນາຍໜ້າ' ຍັງໝາຍເຖິງ "ຜູ້ຮັບແລ່ນເອກະສານຫຼືໜັງສືທາງການໂດຍມີຄ່າຕອບແທນຈຳນວນໃດໜຶ່ງ" ເຊັ່ນ:

- ໄປເຮັດໜັງສືເດີນທາງ ມີນາຍໜ້າມາສະເໜີຊິແລ່ນເອກະສານໃຫ້ ແຕ່ຕ້ອງໄດ້ຈ່າຍເງິນຄ່າແລ່ນຫຼາຍເຕີບ !
- ບາງຄົນຈ້າງນາຍໜ້າແລ່ນວິ້ງເຕັ້ນປ່ຽນປ້າຍລົດຈາກກຳແພງນະຄອນມາເປັນນະຄອນຫຼວງໃຫ້.

'ຊິບປິ້ງ' ເປັນຄຳນາມ ທັບສັບມາຈາກພາສາອັງກິດ Shipping ເຊິ່ງມີຄວາມໝາຍວ່າ "ການຂົນສົ່ງ, ການລຳລຽງ, ການຂົນສົ່ງທາງເຮືອ.

ພ້ອມກັນນັ້ນ 'ຊິບປິ້ງ' ຍັງໝາຍເຖິງ "ຄົນທີ່ເຮັດໜ້າທີ່ແລ່ນເອກະສານໃຫ້ສິນຄ້າທີ່ຈະນຳເຂົ້າຜ່ານຂັ້ນຕອນທີ່ຖືກຕ້ອງ ໂດຍດຳເນີນການກະກຽມເອກະສານ ແລະ ເດີນເລື່ອງກັບກົມພາສີ ປຽບຄືຄົນກາງທີ່ເປັນຝ່າຍຕິດຕໍ່ໄປຍັງກົມພາສີໃນການຍື່ນໃບຂົນສົ່ງສິນຄ້າຈາກປະເທດຕົ້ນທາງໄປຍັງປະເທດປາຍທາງ"

ນອກຈາກນັ້ນຈາກການໃຫ້ສຳພາດຂອງຫົວໜ້າກອງຄຸ້ມຄອງພາຫະນະແລະການຂັບຂີ່ ນວ ຕໍ່ສະຖານີໂທລະພາບແຫ່ງຊາດ ໄດ້ໃຫ້ຄວາມໝາຍ 'ຊິບປິ້ງ' ເປັນ 2 ປະເພດ: 1. ຊິບປິ້ງຂອງບໍລິສັດມາແລ່ນເອກະສານໃຫ້ລູກຄ້າ 2. ຊິບປິ້ງທີ່ຮັບເອກະສານກັບຜູ້ນັ້ນຜູ້ນີ້ເພື່ອແລ່ນໃຫ້.

# ຂໍ້ສັງເກດ: 'ນາຍໜ້າ' ໃນຄວາມໝາຍ "ຜູ້ຮັບແລ່ນເອກະສານຫຼືໜັງສືທາງການໂດຍມີຄ່າຕອບແທນຈຳນວນໃດໜຶ່ງ" ກັບ 'ຊິບປິ້ງ' ໃນຄວາມໝາຍ "ຜູ້ຮັບເອກະສານກັບຜູ້ນັ້ນຜູ້ນີ້ເພື່ອແລ່ນໃຫ້" ມີຄວາມໝາຍໃກ້ຄຽງກັນ.




# ວິທີເຮັດວຽກ

**ພາກທີ 5**

**ບັນຫາວິທີເຮັດວຽກ**

ຄິດປະດິດ ບໍ່ແມ່ນຂອງແປກປະຫຼາດ, ມັນແມ່ນຜົນຂອງການຄົ້ນຄວ້າພິຈາລະນາພາຍໃນສະພາບການ ແລະ ເງື່ອນໄຂ ອັນງ່າຍດາຍທີ່ສຸດ, ອັນທຸກຄົນບໍ່ເຄີຍເຮັດ, ອັນຖືກແທດກັບຄວາມຈິງທີ່ສຸດ.

ບໍ່ວ່າຜູ້ໃດ ຖ້າຫາກຕັດສິນໃຈເຮັດປະໂຫຍດໃຫ້ແກ່ປະຊາຊົນ, ແລ້ວຊ້າຍອມຮຽນ, ຍອມຖາມປະຊາຊົນ, ສະໝອງຍອມອິດທົນຄິດ, ມືຍອມອິດທົນເຮັດ ດັ່ງນັ້ນ, ເດັດຂາດຕ້ອງມີຫົວຄິດປະດິດ, ເດັດຂາດຕ້ອງເຮັດໄດ້ທຸກວຽກການທີ່ເປັນຜົນປະໂຫຍດໃຫ້ມະນຸດຊາດ. ພວກເຮົາຕ້ອງຍົກຍໍ ແລະ ເປີດປະຊາທິປະໄຕກວ້າງຂວາງອອກ, ຊຸກຊວນພະນັກງານ, ສະມາຊິກຂອງພັກ, ສອນໃຫ້ເຂົາເຈົ້າຄິດ, ສອນໃຫ້ເຂົາເຈົ້າຮຽນ ແລະ ຖາມປະຊາຊົນ, ຊຸກຊວນເຂົາເຈົ້າໃຫ້ພະຍາຍາມຊອກ, ພະຍາຍາມສະເໜີ ແລະ ເຮັດວຽກການທີ່ເປັນຜົນໃຫ້ແກ່ປະຊາຊົນ. ເມື່ອເຂົາເຈົ້າຫາກມີຫົວຄິດ ປະດິດເລັກນ້ອຍແລ້ວ ກໍຊ່ວຍເຂົາເຈົ້າໃຫ້ຂະຫຍາຍອອກ ແລະ ຍ້ອງຍໍສັນລະເສີນເຂົາເຈົ້າ, ໃຫ້ເຂົາເຈົ້າຫ້າວຫັນຂຶ້ນຕື່ມ, ເຮັດແນວນັ້ນ ແນວຄິດກຽດຄ້ານ ຕາມມີຕາມເກີດກໍນັບມື້ຫຼຸດຜ່ອນ, ຫົວຄິດປະດິດ ແລະ ແນວຄິດຫ້າວຫັນນັບມື້ງນັບເພີ່ມທະວີຫຼາຍຂຶ້ນເລື້ອຍໆ.

ອ່ານຕໍ່ສະບັບໜ້າ...



ສຸກສະບາຍທາຍໂລດ

# ນັ່ງໃຊ້ຄອມພິວເຕີດົນເກີນໄປ ສິ່ງຜົນກະທົບຕໍ່ສຸຂະພາບ

ໂດຍ: ທິວກະທິ

ນັກວິໄຈທາງການແພດພົບວ່າ ອາການເລືອດແຂງຕົວເປັນກ້ອນຂອງຄົນເຈັບທີ່ມີອາການໃກ້ຈະເສຍຊີວິດລາຍໜຶ່ງ ມີສາເຫດມາຈາກການທີ່ໃຊ້ເວລານັ່ງເຮັດວຽກຢ່າງຕໍ່ເນື່ອງກັບຄອມພິວເຕີດົນນານເກີນໄປ ໂດຍບໍ່ໄດ້ມີການເຄື່ອນເໜັງຮ່າງກາຍ ຫຼື ລຸກອອກໄປທາງໃດເລີຍ ທັງນີ້ກໍເພາະວ່າຄອມພິວເຕີສາມາດເຮັດໃຫ້ຄົນຕາຍໄດ້, ແຕ່ກໍບໍ່ໄດ້ໝາຍເຖິງນັກຫຼິ້ນເກມທີ່ຕາຍຕໍ່ໜ້າເຄື່ອງຄອມພິວເຕີ ຫຼື ຈາກອົດອາຫານ ແລະ ນ້ຳຕໍ່ເນື່ອງເປັນເວລາຫຼາຍວັນ, ແຕ່ໝາຍເຖິງຜູ້ໃດກໍຕາມ ທີ່ໃຊ້ເວລາຫຼາຍຊົ່ວໂມງຢູ່ຕໍ່ໜ້າໂຕະຄອມພິວເຕີ ໂດຍບໍ່ໄດ້ມີການເຄື່ອນເໜັງຮ່າງກາຍ ຫຼື ລຸກອອກໄປທາງໃດເລີຍ. ນັກວິໄຈປະເທດນິວຊີແລນ ຫຼື ນູແວນເຊລັງ ພົບວ່າ: ການນັ່ງເຮັດວຽກກັບຄອມພິວເຕີເປັນເວລາຫຼາຍຊົ່ວໂມງ ອາດຈະເຮັດໃຫ້ເລືອດແຂງຕົວເປັນກ້ອນ ເຊິ່ງເປັນອັນຕະລາຍ ແລະ ສາມາດເສຍຊີວິດໄດ້ ເຊິ່ງມີລັກ ສະນະຄ້າຍຄືກັນກັບການເກີດອາການທີ່ເອີ້ນກັນວ່າ DEEP VEIN THROMBOSIS ທີ່ເກີດຈາກການນັ່ງເຮືອບິນໃນໄລຍະທາງໄກໆ ໂດຍສະເພາະຊັ້ນທີ່ນັ່ງມີລາຄາປະຢັດບາງທີເອີ້ນອາການນີ້ວ່າ ECONOMY CLASS SYSDROME ຄວາມເປັນຈິງກ່ຽວກັບເລື່ອງນີ້ ຖືກຄົ້ນພົບໂດຍນັກວິໄຈທີ່ໄດ້ຂໍ້ມູນວ່າ ຜູ້ຊາຍໃນໄວອາຍຸ 32 ປີຄົນໜຶ່ງ ເຊິ່ງໄດ້ນັ່ງເຮັດວຽກຢູ່ຕໍ່ໜ້າຄອມພິວເຕີປະມານ 18 ຊົ່ວໂມງຕໍ່ວັນ ແລ້ວມີອາການບໍ່ຮູ້ສຶກຕົວ ເນື່ອງຈາກເກີດມີອາການເລືອດແຂງຕົວເປັນກ້ອນ ໂດຍກ້ອນເລືອດທີ່ເກີດຂຶ້ນນີ້ ຈະຢູ່ໃນບໍລິເວນຂາຂອງລາວເອງ ກ່ອນທີ່ຈະແຕກກະຈາຍ ແລະ ແລ່ນໄປໃສ່ປອດທັງສອງເບື້ອງຂອງລາວອີກເທື່ອໜຶ່ງ ເຊິ່ງອາການນີ້ເອີ້ນວ່າ DEEP VEIN THROMBOSIS, ທັງນີ້ ຈະເກີດຂຶ້ນເມື່ອເວລາມີເລືອດຂຸ້ນຢູ່ໃນເສັ້ນເລືອດດຳ ເຊິ່ງມັນຈະຄ່ອຍໆປ່ຽນຕົວມັນເອງໄປເປັນກ້ອນເລືອດ ຈະສາມາດສັງເກດເຫັນໄດ້ຢ່າງຈະແຈ້ງຄື: ຂາຈະເລີ່ມມີອາການບວມ, ສ່ວນອາການທີ່ອັນຕະລາຍຈະເກີດຂຶ້ນເມື່ອມີເລືອດແຕກອອກແລະແລ່ນໄປເຖິງຫົວໃຈ ຫຼື ອະໄວຍະວະພາຍໃນທີ່ສຳຄັນຂອງຮ່າງກາຍ ເຊິ່ງອາການດັ່ງກ່າວນີ້ ບໍ່ສາມາດຄາດຄະເນ ຫຼື ເດົາເອົາໄດ້. ມີຂໍ້ແນະນຳຂອງທາງການແພດ ເຊິ່ງນອກຈາກທີ່ຈະບໍ່ຄວນນັ່ງເຮັດວຽກ ຫຼື ຫຼິ້ນຄອມພິວເຕີດົນນານຈົນເກີນໄປແລ້ວ ຖ້າຫຼີກເວັ້ນບໍ່ໄດ້ ໃນຂະນະທີ່ຮູ້ສຶກວ່ານັ່ງດົນນານແລ້ວໃຫ້ພະຍາຍາມເໜັງຕີງ ແລະ ເຄື່ອນໄຫວຂໍ້ຕີນຂໍ້ມື ພ້ອມທັງດື່ມນ້ຳ ແຕ່ບໍ່ຄວນດື່ມເຫຼົ້າ. ນອກຈາກນີ້, ຜູ້ທີ່ໃຊ້ຄອມພິວເຕີແລ້ວນັ່ງເປັນເວລາດົນ ກໍຄວນຈະລຸກຂຶ້ນ ແລະ ຢຽດແຂນ-ຂາເທື່ອລະຊົ່ວໂມງ. ການນັ່ງເຮັດວຽກດ້ວຍຄອມພິວເຕີຢູ່ໃນທ່າທາງທີ່ຖືກຕ້ອງ ຈະເຮັດໃຫ້ສາມາດຫຼຸດຜ່ອນຄວາມສ່ຽງລົງໄດ້ ແຕ່ຊ່ຽວຊານບາງທ່ານຍັງໃຫ້ຂໍ້ສັງເກດວ່າ ຜູ້ທີ່ນຳໃຊ້ຄອມພິວເຕີໂນດບຸກ ແມ່ນຈະມີຄວາມສ່ຽງຕໍ່ອາການຜິດປົກກະຕິ 2 ເທື່ອ ໂດຍສະເພາະຜູ້ທີ່ຕ້ອງໄດ້ນັ່ງເຮັດວຽກດ້ວຍໂນດບຸກ ໃນຊັ້ນທີ່ນັ່ງລາຄາປະຢັດຢູ່ເທິງເຮືອບິນ.






## ອວຍພອນພັກ

# ຫຼານເຈົ້ານ້ອຍ

ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ
ຄົບຮອບ 69 ປີ (22/3/1955-22/3/2024)

❊ ດວງເດືອນດູເດັ່ນຟ້າ
ມີໝູ່ມວນດາລາ
ປຸ້ມລຸມກັນເຍືອງຟ້າ
ປະຈັກຕາເດັ່ນແຈ້ງ

ນະພາຮຸ່ງເຮືອງໃສ
ແວດວົງໂຮມຫຸ້ມ
ເວຫາງາມສະຫງ່າ
ແຍງແລ້ວເບື່ອບໍ່ເປັນ

❊ ຍາມໃດຟ້າມືດຄຶ້ມ
ມອງບໍ່ເຫັນເດືອນດາວ
ຫາກເຮົາບິນເໜືອຟ້າ
ຊ່ວຍກັນສາດສ່ອງໃຫ້

ມວນເມກມາບັງ
ສ່ອງແສງບົນຟ້າ
ເດືອນດາວຍັງດູເດັ່ນ
ເມືອງຟ້າສະຫງ່າງາມ ທ່ານເອີຍ !

❊ ພັກນັ້ນປຸນປຽບໄດ້
ດາລາຄືປະຊາຊົນ
ປຸ້ມລຸມກັນເສີມສ້າງ
ແຈ້ງດັ່ງເດືອນນ່ານຟ້າ

ເດືອນເດັ່ນບົນນະພາ
ຮ່ວມໂຮມຮຸມຫຸ້ມ
ເມືອງລາວໃຫ້ໃສສ່ອງ
ຈະເລີນເຫຼື້ອມເຮື່ອເຮືອງ

❊ ເຖິງແມ່ນຕົກບ່ອນບົ້ນ
ພັກປະຊາກໍຍັງ
ພັກນຳພາຊຸຊ້ວນ
ຊ່ວຍເຍືອງແຍງສ່ອງໃຫ້

ມືວມືດສູນແສງ
ຮ່ວມແຮງແຂງສູ້
ຊາວປະຊາຕາມໄຕ່
ເມືອງບ້ານເດັ່ນງາມ

❊ ວັນນີ້ ວັນເກີດເຈົ້າ
ປວງປະຊາຊົນລາວ
ຜູ້ນຳພັກ-ລັດຈຶ່ງໄດ້
ເປັນແສງເດືອນສ່ອງໃຫ້

ຄົບ 69 ພັນສາ
ຮ່ວມອວຍພອນໃຫ້
ຍືນຍົງຂະໜົງແກ່ນ
ປະຊາໄດ້ໄຕ່ຕາມ ຊອບແລ້ວ !

❊ ຂໍໃຫ້ພັກຈົ່ງໄດ້
ນຳພາ ສປປ ລາວ
ນຳພາລາວເຮົາໃຫ້
ພຸ່ງປະກາຍເດັ່ນພົ້ນ

ເຍືອງສ່ອງແນວທາງ
ສູ່ຄວາມຈະເລີນກ້າວ
ຈະເລີນງາມນາມຮຸ່ງ
ລາວກ້າວພັດທະນາ ທ່ານເອີຍ !



## ໜັກຫາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❊ **ຊົມເຊີຍ!** ລະບອບ**ຈັດຕະບຽບການເກີດ** ຜ່ານລະບົບຄຸ້ມຄອງພົນລະເມືອງ**ເອເລັກໂຕຣນິກ** ເຊິ່ງຍືນຍ່ອລະບົບດັ່ງກ່າວ ກ້າວເລີ່ມຕົ້ນເມື່ອປີ **2022 ຜ່ານມາ** ແລະ ພັດທະນານຳໃຊ້ໃນ **28 ກຸມພາ 2023** ຕາມການລາຍງານ ແມ່ນ **ລັດຖະບານໄດ້ຮ່ວມລົງນາມ** ແລະ ຮັບຮອງລະບອບການນີ້ ແຕ່ວັນທີ **1-13 ມີນາ 2024** ເນື່ອງຈາກວຽກນີ້ ອຳນວຍຄວາມສະດວກໃຫ້ແກ່ການ**ຄຸ້ມຄອງ** ນຳໃຊ້ ທັງປົກປັກຮັກສາ ແລະ ຄົ້ນຫາ**ຂໍ້ມູນພົນລະເມືອງ**ໄດ້ຢ່າງ**ວ່ອງໄວ** ສຳລັບອີເລາະວີໃຈ **ເພື່ອວາງແຜນພັດທະນາເສດຖະກິດ-ສັງຄົມ** ກໍຄື ເປົ້າໝາຍຕໍ່ວຊື້ອັດແບບຍືນຍົງ **ຂໍຊົມເຊີຍອີກຄັ້ງ** ແລະ ຫວັງວ່າສັງຄົມລາວ ຊິກ້າວໄກພັດທະນາ ລື່ນເດີນດາກົ້ ຂໍໃຫ້ມີຜົນໄດ້ ໄປຕາມແຜນວາງວາດ ຂໍໃຫ້ຊາດພຸ່ງພົ້ນ ຈະເລີນເລື້ອຍຕະຫຼອດໄປ **ຊອບແລ້ວ!**

❊ **ເດືອນ**ມີນາ ກຽມຈາກລາຜ່ານພົ້ນ ໄລລັບຕາມເວລາ ເດືອນເມສາກຽມເຢືອນ ຍ່ອງຍາມຖາມຢື້ ເທດການຮີດຮາກ້ອງ ກຽມສະຫຼອງປີໃໝ່ ບຸນສົງການຫຍັບມໍ່ໂກ້ ຫຼາຍຄົນຕັ້ງຕໍ່ຄອຍ **ຊົ້ນແລ້ວ!**

## ຊອບຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ຕອບກົງຄໍາຖາມ

ມີພະນັກງານຂາຍແພັບແຫ່ງໜຶ່ງໄປສຳພະບາໃຫ້ແກ່ແມ່ບ້ານກ່ຽວກັບການໃຊ້ແພັບຊັກເຄື່ອງ ພ້ອມທັງຕັ້ງຄໍາຖາມສົນທະນາວ່າ:

**ພະນັກງານ:** ສະບາຍດີ ເຈົ້າໃຊ້ຫຍັງຊັກເຄື່ອງບໍ່ ?
**ແມ່ບ້ານ:** ໃຊ້ຜົວ
**ພະນັກງານ:** !!!!!!!??????



## ຄະຕິເຕືອນໃຈ

# ດອກຫຍ້າ

ຢ່າໃຫ້ເສຍແຮງໄດ້ ເປັນຄົນບ່າເພີ່ນ **ໄດ່ເດີ**
ຄົນກໍຄົນແທ້ໆ ໜຽວຕັ້ງຈຶ່ງແມ່ນຄົນ

ລັດຖະສະພາຕ່າງປະເທດ

# ກຣີວຊີ ຈະຈັດການເລືອກຕັ້ງ ສະມາຊິກສະພາໃນວັນທີ 17 ເມສາ

ການເລືອກຕັ້ງລັດຖະສະພາກຣີວຊີ ຈະຈັດຂຶ້ນໃນວັນທີ 17 ເມສານີ້, ຕາມການປະກາດຂອງປະທານາທິບໍດີ ໂຊຣານ ມິລາໂນວິດ ເມື່ອວັນສຸກທີ 15 ມີນາຜ່ານມາ.

ບັນດາສະມາຊິກລັດຖະສະພາ ໄດ້ລົງຄະແນນສຽງຍຸບລັດຖະສະພາໃນວັນພະຫັດທີ 15 ມີນາ 2024 ເປີດທາງໃຫ້ມີການເລືອກຕັ້ງໃໝ່; ອີງຕາມກົດໝາຍຂອງກຣີວຊີ, ການເລືອກຕັ້ງລັດຖະສະພາ ຈະຕ້ອງຈັດຂຶ້ນພາຍໃນ 30 ຫາ 60 ວັນ ນັບແຕ່ວັນຍຸບລັດຖະສະພາ.

ພັກສະຫະພັນປະຊາທິປະໄຕກຣີວຊີ ທີ່ເປັນພັກກຳອຳນາດເຊິ່ງນຳໂດຍທ່ານນາຍົກລັດຖະມົນຕີ ອັນເດຣດ ເປລນໂຄວິດ ມີທ່າອຽງທີ່ຈະກາຍເປັນພັກທີ່ໃຫຍ່ທີ່ສຸດໃນລັດຖະສະພາທີ່ຈະມາເຖິງ; ຢ່າງໃດກໍຕາມ, ຄາດວ່າຈະບໍ່ໄດ້ຮັບສຽງສ່ວນຫຼາຍຢ່າງເດັດຂາດ ແລະ ຕ້ອງຈັດຕັ້ງລັດຖະບານປະສົມກັບອີກໜຶ່ງ ຫຼື ຫຼາຍພັກການເມືອງ.

**ແຫຼ່ງຂ່າວ: ຊິນຮວາ**



# ອິນເດຍ ກຽມເປີດຫີບເລືອກຕັ້ງທົ່ວໄປໃນວັນທີ 19 ເມສານີ້

ວັນເສົາທີ16 ມີນາຜ່ານມາ, ຄະນະກຳມະການການເລືອກຕັ້ງຂອງອິນເດຍ ໄດ້ປະກາດແຜນການຈັດການເລືອກຕັ້ງທົ່ວໄປຄັ້ງໃໝ່ ຈະເກີດຂຶ້ນໃນວັນທີ19 ເມສາ, 26 ເມສາ, 7 ພຶດສະພາ, 13 ພຶດສະພາ, 20 ພຶດສະພາ, 25 ພຶດສະພາ ແລະ 1 ມິຖຸນາ; ສ່ວນການນັບຄະແນນສຽງຈະເລີ່ມໃນວັນທີ4 ມິຖຸນາ2024.

ການເລືອກຕັ້ງຂອງອິນເດຍ ຖືວ່າມີຂະໜາດໃຫຍ່ທີ່ສຸດໃນໂລກ, ໂດຍຄະນະກຳມະການການເລືອກຕັ້ງ ໃຫ້ຮູ້ວ່າ: ການລົງຄະແນນສຽງຄັ້ງນີ້ ມີຜູ້ລົງທະບຽນເພື່ອໃຊ້ສິດເກືອບ 970 ລ້ານຄົນ ແລະ ກຽມໜ່ວຍປ່ອນບັດຫຼາຍກວ່າ 1 ລ້ານແຫ່ງໃນທົ່ວປະເທດ.

ການເລືອກຕັ້ງຄັ້ງນີ້ ຈະເປັນການເລືອກຕັ້ງສະມາຊິກຊຸດໃໝ່ທັງໝົດ 543 ທີ່ນັ່ງຂອງສະພາ ຫຼື ສະພາປະຊາຊົນ (ສະພາຕ່ຳ) ແລະພັກການເມືອງຕ້ອງໄດ້ຮັບການເລືອກຕັ້ງຢ່າງໜ້ອຍ 272 ທີ່ນັ່ງ ເພື່ອຈະໄດ້ສຽງສ່ວນຫຼາຍພັກດຽວໃນສະພາຕ່ຳ.

ໃນການເລືອກຕັ້ງທີ່ຈະມາເຖິງ ເຊິ່ງເປັນການລົງຄະແນນສຽງຕາມກຳນົດເວລາ, ນາຍົກລັດຖະມົນຕີ ນະເຣນທຣາ ໂມດີ ຈາກພັກຊາດນິຍົມຮິນດູ ຫຼື ບີເຈພີ(BJP) ກຳລັງພະຍາຍາມຊະນະການເລືອກຕັ້ງເພື່ອດຳລົງຕຳແໜ່ງນາຍົກລັດຖະມົນຕີຕິດຕໍ່ກັນ 3 ສະໄໝ, ທ່ານພວມປະເຊີນໜ້າກັບຄວາມທ້າທາຍຈາກພັນທະມິດຂອງພັກຝ່າຍຄ້ານປະມານ 24 ພັກ ຄືພັນທະມິດເພື່ອການພັດທະນາແຫ່ງຊາດອິນເດຍ (Indian National Developmental Inclusive Alliance-INDIA) ນຳໂດຍພັກຄອງເກຣດສ໌ (Congress) ແກນນຳຝ່າຍຄ້ານ.

ພັກບີເຈພີຕັ້ງເປົ້າໝາຍໄວ້ທີ່ 370 ທີ່ນັ່ງສຳລັບຕົນເອງ ແລະ ຫຼາຍກວ່າ 400 ບອກັບກຸ່ມພັນທະມິດທີ່ນຳໂດຍພັກ ບີເຈພີ, ທີ່ເອີ້ນວ່າພັນທະມິດປະຊາທິປະໄຕແຫ່ງຊາດ (National Democratic Alliance-NDA).

ທ່ານ ໂມດີ ຜູ້ນຳຄົນປັດຈຸບັນ ທີ່ດຳລົງຕຳແໜ່ງນາຍົກລັດຖະມົນຕີມາຕັ້ງແຕ່ປີ2014 ແລະ ນຳພາພັກ ບີເຈພີ ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນໃນການເລືອກຕັ້ງຄັ້ງຫຼ້າສຸດເມື່ອປີ 2019 ດ້ວຍການໄດ້ທີ່ນັ່ງພຽງພັກດຽວເຖິງ 303 ທີ່ນັ່ງ, ນີ້ແມ່ນຜົນສຳເລັດທີ່ດີທີ່ສຸດຂອງພັກນັບແຕ່ສ້າງຕັ້ງໃນປີ 1980.

ໃນຂະນະທີ່ພັກຄອງເກຣດສ໌, ເຊິ່ງກຳອຳນາດມາຫຼາຍປີນັບຕັ້ງແຕ່ປະເທດຊາດໄດ້ຮັບເອກະລາດຈາກການປົກຄອງຂອງອັງກິດໃນປີ 1947 ກຳລັງຕໍ່ສູ້ຢ່າງໜັກທີ່ຈະກັບຄືນມາກຳອຳນາດອີກຄັ້ງ.

**ແຫຼ່ງຂ່າວ: ຊິນຮວາ**




# ຄະນະລັດຖະມົນຕີຍີ່ປຸ່ນ ສະເໜີຮ່າງກົດໝາຍ ການລ້ຽງດູລູກຮ່ວມກັນ ຫຼັງຈາກການປະຮ້າງ

ເມື່ອວັນສຸກທີ08 ມີນາຜ່ານມາ, ລັດຖະບານຍີ່ປຸ່ນ ໄດ້ອະນຸມັດຮ່າງກົດໝາຍປັບປຸງບາງເນື້ອໃນຂອງປະມວນກົດໝາຍແພ່ງ (Civil Code) ເພື່ອອະນຸຍາດໃຫ້ພໍ່ແມ່ທີ່ປະຮ້າງກັນ ສາມາດລ້ຽງດູລູກຮ່ວມກັນ ຫາກສາມາດບັນລຸຂໍ້ຕົກລົງລະຫວ່າງສອງຝ່າຍ, ຖ້າວ່າບໍ່ສາມາດບັນລຸຂໍ້ຕົກລົງຮ່ວມກັນໄດ້ ສານຄອບຄົວຈະເຂົ້າມາເປັນຜູ້ໄກ່ເກ່ຍ ແລະຕັດສິນວ່າຈະໃຫ້ລ້ຽງດູລູກຮ່ວມກັນ ຫຼື ລ້ຽງດູລູກແຕ່ພຽງຝ່າຍດຽວ.



ຕະຫຼອດໄລຍະເວລາຫຼາຍທົດສະວັດທີ່ຜ່ານມາ, ສິດທາງກົດໝາຍໃນການລ້ຽງດູລູກມັກຈະເປັນຂອງແມ່ ເມື່ອຜົວເມຍປະຮ້າງກັນ ໂດຍຝ່າຍທີ່ເຫັນດ້ວຍໃຫ້ເຫດຜົນສະໜັບສະໜູນວ່າເພື່ອຫຼຸດຜ່ອນຄວາມສ່ຽງຂອງເດັກນ້ອຍ ແລະ ເຍົາວະຊົນ ທີ່ຈະກາຍເປັນຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງພາຍໃນຄອບຄົວແລະການລ່ວງລະເມີດທາງເພດ; ເຖິງຢ່າງໃດກໍຕາມ, ຫວ່າງມໍ່ໆມານີ້, ໄດ້ມີຄຳເຫັນຈາກຫຼາຍຝ່າຍເພີ່ມຂຶ້ນວ່າການມອບສິດທາງກົດໝາຍໃຫ້ແກ່ຝ່າຍໃດຝ່າຍໜຶ່ງຢ່າງເດັດຂາດໃນການລ້ຽງດູລູກ ມັນຄືກັບວ່າເດັກຖືກແຍກອອກຈາກຜູ້ປົກຄອງອີກຄົນໜຶ່ງ ເຊິ່ງເປັນຜູ້ຮ່ວມໃຫ້ກຳເນີດ ແລະອາດຈະສົ່ງຜົນກະທົບຕໍ່ສະພາບຈິດໃຈຂອງຜູ້ເປັນລູກໃນໄລຍະຍາວ.

ເນື້ອໃນຂອງຮ່າງກົດໝາຍສະບັບປັບປຸງໂດຍຄະນະລັດຖະບານຍີ່ປຸ່ນລະບຸວ່າ: ການໃຫ້ຜົວຫຼືເມຍທີ່ຈະປະຮ້າງກັນໄດ້ຮັບສິດເປັນຜູ້ລ້ຽງດູລູກແຕ່ຝ່າຍດຽວ ຍັງສາມາດເກີດຂຶ້ນໄດ້ຫາກທັງສອງຝ່າຍເຫັນດີຮ່ວມກັນຫຼືອີງຕາມຄຳຕັດສິນຂອງສານຄອບຄົວ ເພື່ອປ້ອງກັນບໍ່ໃຫ້ລູກຕົກເປັນເຫຍື່ອຂອງການໃຊ້ຄວາມຮຸນແຮງ; ຖ້າພໍ່ແມ່ຄົນໃດຄົນໜຶ່ງຖືກສົງໄສວ່າມີການລ່ວງລະເມີດເດັກຫຼືໃຊ້ຄວາມຮຸນແຮງ, ສານຄອບຄົວຈະໃຫ້ພໍ່ແມ່ຜູ້ໃດຜູ້ໜຶ່ງລ້ຽງດູລູກພາຍໃຕ້ຮ່າງກົດໝາຍສະບັບນີ້.

ລັດຖະບານຍີ່ປຸ່ນ ມີແຜນທີ່ຈະຜ່ານຮ່າງກົດໝາຍດັ່ງກ່າວພາຍໃນທ້າຍກອງປະຊຸມສະໄໝສາມັນຂອງລັດຖະສະພາ ທີ່ພວມດຳເນີນຢູ່ຈົນເຖິງເດືອນມິຖຸນານີ້.

**ແຫຼ່ງຂ່າວ: ຊິນຮວາ**

# ຮົງກົງ ສະເໜີຮ່າງກົດໝາຍ ປ້ອງກັນຄວາມໝັ້ນຄົງແຫ່ງຊາດຕໍ່ສະພາ



ສຳນັກຂ່າວ ບີບີຊີ ລາຍງານຈາກເຂດບໍລິຫານພິເສດຮົງກົງ, ປະເທດຈີນ ໃນວັນທີ 8 ມີນາ 2024 ວ່າ: ຄະນະຜູ້ບໍລິຫານງານຮົງກົງສະເໜີຮ່າງກົດໝາຍວ່າດ້ວຍ "ປ້ອງກັນຄວາມໝັ້ນຄົງແຫ່ງຊາດ" ເຂົ້າສູ່ການພິຈາລະນາໂດຍສະພານິຕິບັນຍັດ ເຊິ່ງແບ່ງອອກເປັນ 5 ການກະທຳຜິດຄື: 1) ການກໍ່ກະບົດ ຫຼື ການທໍລະຍົດຕໍ່ຊາດ, 2) ການປຸກລະດົມກໍ່ຄວາມບໍ່ສະຫງົບ, 3) ການສອດແນມ ແລະ ການລັກຂໍ້ມູນຂອງລັດ, 4) ການໂຈມຕີທີ່ເປັນອັນຕະລາຍຕໍ່ຄວາມໝັ້ນຄົງແຫ່ງຊາດ, ແລະ 5) ການແຊກແຊງຈາກພາຍນອກ.

ໂທດສູງສຸດຕາມກົດໝາຍສະບັບໃໝ່ນີ້ຖ້າຫາກໄດ້ຮັບການອະນຸມັດຈາກບັນດາສະມາຊິກສະພານິຕິບັນຍັດຂອງຮົງກົງ, ຄືຕ້ອງຮັບໂທດຈຳຄຸກຕະຫຼອດຊີວິດ.

ນອກຈາກນີ້, ຮ່າງກົດໝາຍຍັງໄດ້ກຳນົດອະນຸຍາດໃຫ້ເຈົ້າໜ້າທີ່ສືບສວນສອບສວນກັກຕົວຜູ້ຕ້ອງສົງໄສທີ່ລະເມີດກົດໝາຍດັ່ງກ່າວ ເປັນເວລາສູງສຸດ 16 ວັນ ໂດຍບໍ່ຈຳເປັນຕ້ອງມີການຕັ້ງຂໍ້ກ່າວຫາຢ່າງເປັນທາງການ ແລະ ການລະເມີດກົດໝາຍສະບັບນີ້ ເຖິງວ່າຈະເກີດຂຶ້ນຢູ່ນອກຮົງກົງກໍຕາມ, ແຕ່ຖືວ່າສິດອຳນາດຂອງເຈົ້າໜ້າທີ່ ແລະ ຂອງສານ ຍັງກວມເອົາ.

ປັດຈຸບັນ, ຮົງກົງ ມີກົດໝາຍວ່າດ້ວຍຄວາມໝັ້ນຄົງແຫ່ງຊາດ ທີ່ສ້າງໂດຍສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໄດ້ປະກາດໃຊ້ໃນກາງປີ2020.

ແນວໃດກໍດີ, ທ່ານ ຈອນ ລີ (John Lee) ຫົວໜ້າຄະນະຜູ້ບໍລິຫານຮົງກົງກ່າວວ່າ: ການສະເໜີກົດໝາຍຄວາມໝັ້ນຄົງສະບັບໃໝ່ ແມ່ນອີງຕາມມາດຕາ 23 ຂອງກົດໝາຍພື້ນຖານຂອງຮົງກົງ (Basic Law) ທີ່ລະບຸວ່າ: ຮົງກົງຄວນສ້າງກົດໝາຍເປັນຂອງຕົນເອງ ເພື່ອປ້ອງກັນການກະທຳໃດໆກໍຕາມທີ່ເປັນການທໍລະຍົດ, ການແບ່ງແຍກ, ການປຸກລະດົມກໍ່ຄວາມບໍ່ສະຫງົບ ແລະການໂຄ່ນລົ້ມລັດຖະບານປັກກິ່ງ.

ຕາມເວັບໄຊຂ່າວສານຊິນຮວາ, ລັດຖະບານເຂດບໍລິຫານພິເສດຮົງກົງ ໄດ້ດຳເນີນການທາບທາມຄຳຄິດເຫັນສາທາລະນະ ກ່ຽວກັບການອອກກົດໝາຍຕາມມາດຕາ23 ຂອງກົດໝາຍພື້ນຖານ ລະຫວ່າງວັນທີ 30 ມັງກອນ ຫາ 28 ກຸມພາຜ່ານມາ, ເຊິ່ງໃນລະຫວ່າງນັ້ນ 98.6% ຂອງທັດສະນະທີ່ໄດ້ຮັບສະແດງການສະໜັບສະໜູນແລະປະກອບຄຳຄິດເຫັນໃນແງ່ດີ, ຊີ້ໃຫ້ເຫັນວ່າ ກົດໝາຍດັ່ງກ່າວໄດ້ຮັບການສະໜັບສະໜູນຈາກປະຊາຊົນຢ່າງເຂັ້ມແຂງ.

# ເບິ່ງໄວ້ ໄດ້ບົດຮຽນ

# ເລື່ອງທີ່ໜ້າສົນໃຈ ຈາກກຳປູເຈຍ ແລະ ຫວຽດນາມ

❖ ວິເສດ ສະແຫວງສຶກສາ

ບົດຄວາມໃນຄໍລຳ **"ເບິ່ງໄວ້ໄດ້ບົດຮຽນ"** ປະຈຳສະບັບນີ້ ມີເລື່ອງສຳຄັນໃຫ້ອ່ານເຕັມອີ່ມ ເຊັ່ນ ຂ່າວຈາກ **ກຳປູເຈຍ** ກ່ຽວກັບການນຳໃຊ້ວິທີການສຶກສາອົບຮົມເພື່ອຫຼຸດຜ່ອນຈຳນວນ **"ສິງອົມຄວັນ"** ທີ່ຕົກເປັນທາດຂອງສານພິດນິໂກຕິນ ແລະເລື່ອງນະໂຍບາຍເພີ່ມຄວາມສູງໃຫ້ປະຊາກອນ ຢູ່ ຫວຽດນາມ.

ຫຼຸດຜ່ອນການສູບຢາດ້ວຍວິທີການສຶກສາອົບຮົມ ຂ່າວອ່າວເກົ່າຈາກ ກຳປູເຈຍ ທີ່ອອກມາປີ 2021ບອກວ່າໄດ້ມີການສຳຫຼວດຄັ້ງຫຼ້າສຸດກ່ຽວກັບຈຳນວນຜູ້ສູບຢາຢູ່ໃນປະເທດ ແລະ ພົບວ່າ ໄດ້ຫຼຸດລົງໃນລະດັບ 13% ທຽບກັບ 17% ໃນປີ 2017. ຈຳນວນຜູ້ຊາຍທີ່ເຊົາສູບຢາຢ່າງເດັດຂາດ ນັ້ນ ຫຼຸດລົງ 25% ຈາກຕົວເລກ 33% ຄົນທີ່ຖືກສຳຫຼວດນັ້ນ ມີອາຍຸແຕ່ 15 ປີຂຶ້ນໄປ. ໃນ 13% ທີ່ຫຼຸດລົງນັ້ນ ຖ້າຄິດໄລ່ເປັນຕົວເລກແມ່ນເທົ່າກັບ 1,6 ລ້ານຄົນ. ທ່ານ ອີ້ງພິຣຸນ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ໃນເວລານັ້ນ ໄດ້ຊີ້ໃຫ້ເຫັນສາເຫດ ທີ່ນຳໄປສູ່ຜົນສຳເລັດ ໃນການຫຼຸດຜ່ອນຈຳນວນສິງອົມຄວັນວ່າ "ຍ້ອນຄວາມພະຍາຍາມຮ່ວມກັນ ລະຫວ່າງບັນດາກະຊວງ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ ໂດຍໄດ້ນຳໃຊ້ການສຶກສາອົບຮົມເປັນເຄື່ອງມືຕົ້ນຕໍ" ທ່ານຮອງລັດຖະມົນຕີ ທັງເປັນຮອງປະທານຄະນະກຳມະການຄວບຄຸມຢາສູບຂອງ ກຳປູເຈຍ ໄດ້ສະຫຼຸບວ່າ ການສຶກສາອົບຮົມຊ່ວຍໃຫ້ທຸກຄົນ ເຫັນໄດ້ຜົນກະທົບທາງລົບແລະຄວາມເປັນອັນຕະລາຍຂອງຢາສູບທີ່ມີຕໍ່ສຸຂະພາບຂອງຄົນເຮົາ. ຂ່າວນີ້ເຄີຍສະເໜີໃຫ້ທ່ານຜູ້ອ່ານຊາບມາແລ້ວຄັ້ງໜຶ່ງເມື່ອຕົ້ນປີ 2023 ແຕ່ຂໍຊ້ຳຄືນ ເພື່ອໃຫ້ສັງຄົມບ້ານເຮົາໃສ່ໃຈເລື່ອງສຸຂະພາບ ທີ່ປາສະຈາກຄວັນຢາສູບ.

ນະໂຍບາຍເພີ່ມຄວາມສູງໃຫ້ປະຊາກອນ ໃນຊຸມປີຫຼັງໆມານີ້ ທາງການຫວຽດນາມໄດ້ປະກາດໃຊ້ຫຼາຍນະໂຍບາຍທີ່ພົວພັນກັບຊີວິດສ່ວນຕົວຂອງບຸກຄົນເຊັ່ນການສ້າງກົດໝາຍວ່າດ້ວຍການຖືພາແທນ, ການປ່ຽນເພດ ແລະອື່ນໆ. ແຕ່ໃນທີ່ນີ້ ຂໍເວົ້າສະເພາະກ່ຽວກັບນະໂຍບາຍຂອງຫວຽດນາມ ໃນການເພີ່ມຄວາມສູງໃຫ້ແກ່ຄົນຫວຽດນາມຮຸ່ນໃໝ່ທີ່ປະກາດອອກມາເມື່ອປະມານ 6 ປີຜ່ານມາແລ້ວ. ຕໍ່ມາໃນປີ 2022 ກໍໄດ້ມີການສະຫຼຸບກ່ຽວກັບຜົນຮັບຈາກນະໂຍບາຍດັ່ງກ່າວ ເຊິ່ງໄດ້ສະຫຼຸບວ່າ ຄວາມສູງຂອງຄົນຫວຽດນາມຮຸ່ນໃໝ່ ໄດ້ເພີ່ມຂຶ້ນ 3,3 ຊັງຕີແມັດ ສຳລັບເພດຍິງ ແລະ 5,8 ຊັງຕີແມັດສຳລັບເພດຊາຍ ຖ້າຄິດໄລ່ເປັນລວງສູງຕົວຈິງ ກໍແມ່ນແມ່ຍິງມີຄວາມສູງ ໂດຍສະເລ່ຍຢູ່ໃນລະດັບ 155,6 ຊັງຕີແມັດ (ເພດຍິງ) ແລະ 168,1 ຊັງຕີແມັດ (ເພດຊາຍ). ເມື່ອສົມທຽບກັບຄວາມສູງຂອງຄົນຮຸ່ນໃໝ່ໃນອາຊຽນແລ້ວ ຄົນຫວຽດນາມຕົກຢູ່ໃນອັນດັບທີ 4 ຮອງຈາກ ສິງກະໂປ, ມາເລເຊຍ ແລະ ໄທ. ແນວໃດກໍດີ ຂ່າວບອກວ່າໃນ 2 ທົດສະວັດຜ່ານມານີ້ຄວາມສູງຂອງປະຊາກອນຫວຽດນາມ ຮຸ່ນໃໝ່ໄດ້ປາກົດຂຶ້ນຢ່າງຈະແຈ້ງ ເຖິງວ່າຈະບໍ່ຢູ່ໃນຈັງຫວະໄວເທົ່າກັບປະຊາກອນຢູ່ໃນບາງປະເທດ ຂອງພາກພື້ນອາຊີ. ນະໂຍບາຍເພີ່ມຄວາມສູງໃຫ້ປະຊາກອນຮຸ່ນໃໝ່ຢູ່ຫວຽດນາມນັ້ນ ຕິດພັນກັບນະໂຍບາຍສົ່ງເສີມສຸຂະພາບຂອງຜູ້ເປັນແມ່ ແລະ ເດັກນັ້ນເອງ.

## ສຊປລ...

(ຕໍ່ຈາກໜ້າ 1)

ນວນທອງ ສຸວັນວິໄຊ ໄດ້ແຈ້ງຈຸດປະສົງຂອງການລົງຕິດຕາມ, ຊຸກຍູ້ວຽກງານກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ (ຄຊປປລ)ຂັ້ນກະຊວງ,ອົງການ, ນະຄອນຫຼວງ, ແຂວງ, ນະຄອນ. ເມືອງ ແລະ ຮາກຖານ ມີຄວາມເປັນເອກະພາບ, ປະຕິບັດຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ, ກົດລະບຽບຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃຫ້ທ່ວງທັນກັບເວລາ ແລະຕິດພັນກັບການປັບປຸງຄຊປປລແຕ່ລະຂັ້ນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ມີຂະບວນການຕໍ່ເນື່ອງ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຂອງອົງຄະນະພັກຂັ້ນຕ່າງໆ ກໍຄືການກະກຽມກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ຄັ້ງທີ IX ທີ່ຈະມາເຖິງນີ້.

ຄະນະດັ່ງກ່າວ ໄດ້ລົງຕິດຕາມຊຸກຍູ້ວຽກງານກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນຢູ່ສະພາແຫ່ງຊາດ ໂດຍໄດ້ເຮັດວຽກຮ່ວມກັບສະຫາຍ ໄກມະນີ ເທບບົວລີ ຮອງເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ຄະນະ ເຊິ່ງສະຫາຍ ໄກມະນີ ເທບບົວລີ ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານຊາວໜຸ່ມຂອງສພຊໃນໄລຍະຜ່ານມາ, ວຽກງານຂະບວນການ, ວຽກງານ 4 ບຸກ ຕິດພັນກັບວຽກງານວິຊາສະເພາະແລະທິດທາງແຜນການໃນຕໍ່ໜ້າ; ການກະກຽມດຳເນີນກອງປະຊຸມໃຫຍ່ຂອງຊາວໜຸ່ມສະພາແຫ່ງຊາດແລະໜ່ວຍຊາວໜຸ່ມຮາກຖານພາຍໃນ ສພຊ. ສະຫາຍນວນທອງສຸວັນວິໄຊແລະຄະນະ ໄດ້ມີຄຳຖາມເຈາະຈີ້ມກ່ຽວ ກັບປາກົດການຫຍໍ້ທໍ້ຂອງຊາວໜຸ່ມ ເຊັ່ນ: ບັນຫາຢາເສບຕິດ, ຄ່ານິຍົມຂອງຊາວໜຸ່ມ. ຈາກນັ້ນ, ກໍໄດ້ພ້ອມກັນປະກອບຄຳຄິດຄຳ ເຫັນຢ່າງສ້າງສັນ ແລະກົງໄປກົງມາເພື່ອຊອກຫາວິທີແກ້ໄຂໃຫ້ຖືກຕ້ອງສອດຄ່ອງ ແລະ ແທດເໝາະ, ທັນເວລາ.

ການລົງມາຊຸກຍູ້ວຽກງານກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນຢູ່ສະພາແຫ່ງຊາດຄັ້ງນີ້ ແມ່ນເພື່ອກະກຽມຄວາມພ້ອມທາງດ້ານຂະບວນການ, ດ້ານເນື້ອຂອງກອງປະຊຸມ ແລະ ດ້ານບຸກຄະລາກອນ ເພື່ອເຮັດໃຫ້ກອງປະຊຸມໃຫຍ່ຊາວໜຸ່ມສະພາແຫ່ງຊາດ ປະສົບຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**




# ບົດບາດຂອງນາງເມຍ

*# ບ່າວກະບື*

ແມ່ຍິງຊາວອາເມຣິກາຄົນໜຶ່ງ ບອກເພື່ອນຂອງເຂົາວ່າ:

"ແມ່ນເຮົານີ້ແລ້ວ ເຮັດໃຫ້ຜົວເຮົາເປັນເສດຖີເງິນລ້ານ"

"ແລະ ກ່ອນໂຕແຕ່ງກັບລາວຫັ້ນ ລາວເປັນຫຍັງຊັ້ນ?"

ແມ່ຍິງອາເມຣິກາຕອບວ່າ:

"ລາວເປັນເສດຖີເງິນຕື້"

# THE WIFE'S ROLE

*# BAOKBU*

An American woman was telling her friend,

"It is I who made my husband a millionaire."

"And what was he before you married him?"

asked the friend.

The woman replied,

"A billionaire."

## ການພາສາ ກາຕູນ




● ໂດຍ : ພູຜາ

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ